

# ແຜນງານການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ ໃນພາກພື້ນແມ່ນ້ຳຂອງ ພາຍໃຕ້ ອົງການອ໋ອກສ໌ຟາມ (OXFAM) ໂຄງການ ການມີສ່ວນຮ່ວມ ໄລຍະສອງ (IP2)

## ບົດລາຍງານ ການປະເມີນໄລຍະທ້າຍຂອງໂຄງການ
## ຄັ້ງວັນທີ 30 ກັນຍາ 2024

ກະກຽມໂດຍ ທ່ານ Mark Deasey (ຫົວໜ້າທີມ), ທ່ານ Vo Thi Tam ແລະ ທ່ານ ນາງ ບຸນທະວີວັນ ມີຊັບ

This project is supported by:

Australian Aid

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

Embassy of Switzerland

OXFAM

# 1. ສັງລວມຫຍໍ້

**ຂໍ້ມູນທົ່ວໄປ:** ໂຄງການ ການມີສ່ວນຮ່ວມ ໄລຍະສອງ (IP2) ພາຍໃຕ້ ແຜນງານການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ ໃນພາກພື້ນແມ່ນ້ຳຂອງ ຂອງອົງການອ໋ອກສ໌ຟາມ (Oxfam) ແມ່ນໄດ້ຈັດຕັ້ງປະຕິບັດມາຕັ້ງແຕ່ ກາງປີ 2020 ໂດຍ ອົງ ການອ໋ອກຟາມ ຮ່ວມກັບ ອົງການ ແມ່ນ້ຳສາກົນ (International Rivers) ຫຼືຊື່ຫຍໍ້ວ່າ IR. ໂຄງການ IP2 ເປັນ ໝາກຜົນທີ່ໄດ້ຮັບຕໍ່ເນື່ອງຈາກຜົນສຳເລັດຂອງການຈັດຕັ້ງປະຕິບັດ ໂຄງການໄລຍະທີ 1 (IP1) ໃນລະຫວ່າງປີ 2016-2020 ໂດຍໄດ້ຮັບການສະໜູນຈາກ ກະຊວງການຕ່າງປະເທດ ແລະ ການຄ້າ ປະເທດອົດສະຕຣາລີ (DFAT) ໃນ ຈຳນວນມູນຄ່າ 9 ລ້ານໂດລາອົດສະຕຣາລີ ເຊິ່ງເປັນທຶນສະໜັບສະໜູນຫຼັກ ຂອງແຜນງານຄຸ້ມຄອງຊັບພະຍາກອນນ້ຳ ໃນລຸ່ມແມ່ນ້ຳຂອງ (GMWRP) ທີ່ຢູ່ພາຍໃຕ້ DFAT ໃນລະຫວ່າງປີ 2016-2020 ໂດຍໄດ້ມອບໃຫ້ ອົງການ ອ໋ອກສ໌ຟາມ ເປັນຜູ້ຈັດຕັ້ງປະຕິບັດໂຄງການ.

ໂຄງການ IP2 ໄດ້ຮັບການສະໜັບສະໜູນຈາກ ກະຊວງການຕ່າງປະເທດ ແລະ ການຄ້າ ປະເທດອົດສະຕຣາລີ (DFAT) ແລະ ໄດ້ເລີ່ມຮັບການສະໜັບສະໜູນຕື່ມຈາກອົງການເພື່ອການພັດທະນາ ແລະ ຮ່ວມມື ຂອງປະເທດສະວິດເຊີແລນ (SDC) ແຕ່ປີ 2021 ເປັນຕົ້ນມາ. ພາຍໃຕ້ກອບເວລາຂອງການຈັດຕັ້ງປະຕິບັດໂຄງການເບື້ອງຕົ້ນ ແມ່ນຈາກເດືອນ ມິຖຸນາ 2020 ຫາ ເດືອນ ມິຖຸນາ 2024; ແຕ່ຫຼັງຈາກນັ້ນ ແມ່ນໄດ້ມີຂໍ້ຕົກລົງ ຂະຫຍາຍເວລາຈັດຕັ້ງປະຕິບັດໂຄງການຮອດເດືອນ ເມສາ 2025 ພາຍໃຕ້ກອບງົບປະມານເດີມ. ສຳລັບແຫຼ່ງທຶນຂອງໂຄງການ IP2 ແມ່ນໄດ້ຮັບຈາກ DFAT ຈຳນວນ 5,431,705 ໂດລາອົດສະຕຣາລີ ແລະ ຈາກ SDC ຈຳນວນ 3,467,281 ໂດລາສະຫະລັດ. ໃນການຈັດຕັ້ງປະຕິບັດໂຄງການແມ່ນດຳເນີນໂດຍຮູບແບບຂອງພັນທະມິດ ລະຫວ່າງ ອົງການ Oxfam ແລະ International Rivers ຕັ້ງແຕ່ຕົ້ນໂຄງການ ຮອດເດືອນ ມິຖຸນາ 2024 ແລະ ຕັ້ງແຕ່ເດືອນ ກໍລະກົດ 2024 ຫາໄລຍະທ້າຍໂຄງການ ໃນເດືອນ ເມສາ 2025 ຈະມີພຽງສະເພາະແຕ່ອົງການ Oxfam.

ໂຄງການ ການມີສ່ວນຮ່ວມຂອງສັງຄົມ ມີຈຸດປະສົງເພື່ອ ໃຫ້ເກີດການມີສ່ວນຮ່ວມຢ່າງຮອບດ້ານ, ເທົ່າທຽມກັນ ແລະ ມີຄວາມຍືນຍົງ ໃນການຄຸ້ມຄອງແຫຼ່ງນ້ຳ ເຊິ່ງຈະຊ່ວຍຫຼຸດຜ່ອນ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ເພີ່ມຄວາມຮັບຜິດຊອບທາງສັງຄົມ ຕໍ່ກັບປະຊາກອນທີ່ດຳລົງຊີວິດຢູ່ໃນພາກພື້ນລຸ່ມແມ່ນ້ຳຂອງ. ຄວາມມຸ່ງຫວັງຂອງໂຄງການນີ້ກໍ່ແມ່ນເພື່ອ ໃຫ້ຊຸມຊົນທີ່ດຳລົງຊີວິດຢູ່ໃນລຸ່ມແມ່ນ້ຳຂອງ ແລະ ແມ່ນ້ຳສາລະວິນ ສາມາດບັນລຸການຮັບຮູ້ສິດທິຂອງເຂົາເຈົ້າ ຕໍ່ກັບການດຳລົງຊີວິດຢ່າງມີຄວາມຍືນຍົງ.

**ໂຄງການ IP2 ແມ່ນປະກອບດ້ວຍ 3 ຫຼັກການທີ່ສຳຄັນ ທີ່ມີຄວາມເຊື່ອມໂຍງກັບຂອບເຂດການສ້າງຄວາມປ່ຽນແປງ ເຊິ່ງປະ ກອບມີ:**

1. ການມີສ່ວນຮ່ວມຂອງສັງຄົມ, ຄວາມສະເໝີພາບທາງບົດບາດ ຍິງ-ຊາຍ ແລະ ການເປັນຜູ້ນຳຂອງແມ່ຍິງ
2. ການມີສ່ວນຮ່ວມ ແລະ ການສ້າງເຄືອຂ່າຍ ຂອງອົງການຈັດຕັ້ງທາງສັງຄົມ
3. ການມີສ່ວນຮ່ວມຂອງພາກລັດ ແລະ ພາກເອກະຊົນ

ຜົນໄດ້ຮັບທີ່ເກີດຂຶ້ນຈາກການປ່ຽນແປງດັ່ງກ່າວແມ່ນ ໄດ້ລະບຸຊັດເຈນ ຢູ່ໃນ 3 ຄາດໝາຍທີ່ສຳຄັນ ຈາກການປະເມີນໄລຍະທ້າຍຂອງໂຄງການ ເຊິ່ງໄດ້ອະທິບາຍລາຍລະອຽດດັ່ງລຸ່ມນີ້.

**ຈຸດປະສົງຂອງການປະເມີນ:** ການປະເມີນໄລຍະທ້າຍຂອງໂຄງການ ແມ່ນມີຈຸດປະສົງຄື:

1. ເພື່ອປະເມີນຜົນໄດ້ຮັບຂອງການຈັດຕັ້ງປະຕິບັດໂຄງການ ການມີສ່ວນຮ່ວມ ໄລຍະສອງ (IP2) ໂດຍອີງໃສ່ ທິດສະດີແຫ່ງການປ່ຽນແປງ (ToC) ແລະ ທິດສະດີການປະຕິບັດ (ToA) ເຊິ່ງ ທັງສອງທິດສະດີນີ້ແມ່ນ ໄດ້ມີການປັບປຸງ ສຳລັບການປະຕິບັດໃນໄລຍະຂະຫຍາຍໂຄງການຮອດເດືອນ ເມສາ 2025 ໃນກອບງົບປະເມີນເດີມ (ທີ່ບໍ່ໄດ້ຮັບທຶນເພີ່ມ).
2. ເພື່ອປະເມີນຜົນ ບັນດາວິທີການດຳເນີນງານ ແລະ ຍຸດທະສາດທີ່ມີການນຳໃຊ້ ເພື່ອປະກອບສ່ວນໃນການບັນລຸເປົ້າໝາຍ ແລະ ປະສິດທິຜົນຂອງໂຄງການ
3. ເພື່ອສະແດງໃຫ້ເຫັນເຖິງບົດຮຽນສຳຄັນທີ່ໄດ້ຮັບຈາກການດຳເນີນໂຄງການ ສຳລັບອົງການ Oxfam, International Rivers ແລະ ບັນດາຄູ່ຮ່ວມງານ ແລະ ເພື່ອກ້າວໄປສູ່ການນຳສະເໜີ ຂໍ້ສະເໜີແນະນຳ ໃນການສືບຕໍ່ຈັດຕັ້ງປະຕິບັດໂຄງການໃນໄລຍະຕໍ່ໜ້າ ໂດຍຄຳນຶງເຖິງຫຼັກການສຳຄັນໃນການສ້າງການປ່ຽນແປງ

ທີມງານປະເມີນຄັ້ງນີ້ປະກອບດ້ວຍ 3 ທ່ານຄື: ທ່ານ ມາກ ດີເຊ Mark Deasey (ຫົວໜ້າທີມ); ທ່ານ ນາງ ບຸນທະວີວັນ ມີຊັບ ແລະ ທ່ານ ວູ ທີຕຳ Vo Thi Tam ເຊິ່ງທັງ 3 ທ່ານ ກໍ່ລ້ວນແຕ່ມີປະສົບການໃນການມີສ່ວນຮ່ວມກັບວຽກຂອງອົງການ Oxfam ທີ່ດຳເນີນຢູ່ໃນພາກພື້ນລຸ່ມແມ່ນ້ຳຂອງມາກ່ອນ.

**ວິທີການປະເມີນ:** ໃນການປະເມີນຄັ້ງນີ້ແມ່ນດຳເນີນໂດຍ ໜ່ວຍງານບໍລິຫານໂຄງການ(PMU) ຂອງໂຄງການ IP2 ໂດຍໄດ້ຮັບການແນະນຳ ຈາກກຸ່ມອ້າງອີງສະເພາະ ເຊິ່ງປະກອບມີຕົວແທນຈາກ DFAT, SDC, ອົງການ Oxfam ແລະ International Rivers. ການປະເມີນຄັ້ງນີ້ ແມ່ນເລີ່ມຈາກ ການສຶກສາຂໍ້ມູນເບື້ອງຕົ້ນ ຫຼັງຈາກນັ້ນກໍ່ໄດ້ມີການທົບທວນຄືນບັນດາເອກະສານຕ່າງໆ ທີ່ສ້າງຂຶ້ນໃນຕະຫຼອດຊ່ວງຂອງການດຳເນີນໂຄງການ ແລະ ການເກັບກຳຂໍ້ມູນຈາກພາກສ່ວນທີ່ກ່ຽວຂ້ອງ ຫຼືກ ທີ່ເປັນຜູ້ມີສ່ວນຮ່ວມຂອງໂຄງການໃນພາກພື້ນ. ໃນການດຳເນີນການປະເມີນ ຢູ່ໃນປະເທດຫວຽດນາມ ແລະ ກຳປູເຈຍ ແມ່ນມີການສຳພາດໄດ້ຄ່ອນຂ້າງຫຼາຍ ໃນຮູບແບບເຊິ່ງໜ້າສະເພາະ ກັບບຸກຄົນທີ່ກ່ຽວຂ້ອງ (KII) ແລະ ການສົນທະນາເປັນກຸ່ມ (FGD) ລວມເຖິງການໄດ້ສຳພາດຊຸມຊົນໂດຍກົງດ້ວຍ. ໃນຂະນະທີ່ ຢູ່ໃນປະເທດລາວ ເນື່ອງຈາກ ຍັງບໍ່ມີການເຊັນບົດບັນທຶກຄວາມເຂົ້າໃຈ (MOU) ຢ່າງເປັນທາງການ ໃນການດຳເນີນໂຄງການ ສະນັ້ນການເກັບກຳຂໍ້ມູນສ່ວນໃຫຍ່ ຈຶ່ງສາມາດດຳເນີນໄດ້ພຽງ ການສຳພາດສະເພາະບຸກຄົນທີ່ກ່ຽວຂ້ອງເທົ່ານັ້ນ ເຊິ່ງມີການເກັບກຳຂໍ້ມູນຢູ່ສະເພາະ ນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ. ສຳລັບການສຳພາດຜູ້ທີ່ມີສ່ວນກ່ຽວຂ້ອງກັບໂຄງການໃນປະເທດໄທ, ລະດັບພາກພື້ນ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ ແມ່ນໄດ້ມີການດຳເນີນການສຳພາດຜ່ານຊ່ອງທາງອອນລາຍ.

ໃນການປະເມີນ ແມ່ນໄດ້ໃຫ້ຄວາມສຳຄັນ ແລະ ນຳໃຊ້ມຸມມອງ ທາງບົດບາດ ຍິງ-ຊາຍ ເຂົ້າໃນການດຳເນີນການປະເມີນຄັ້ງນີ້ ໂດຍໃຫ້ມີຄວາມສອດຄ່ອງກັບຈຸດປະສົງ ແລະ ໂຄງສ້າງ ໂດຍລວມຂອງ ໂຄງການ IP2.

**ຂໍ້ຈຳກັດ:** ປັດໃຈຫຼັກໆ ທີ່ເປັນຂໍ້ຈຳກັດໃນການດຳເນີນການປະເມີນຄັ້ງນີ້ປະກອບດ້ວຍ:

- ມີຄວາມເປັນໄປໄດ້ຍາກຫຼາຍ ທີ່ຈະເຮັດໃຫ້ເກີດ ຄວາມສົມດູນກັນ ລະຫວ່າງບັນດາປະເທດ ແລະ ຜູ້ທີ່ມີສ່ວນກ່ຽວ ຂ້ອງຕ່າງໆ ໃນລະດັບພາກພື້ນ ເນື່ອງຈາກປັດໃຈຕ່າງໆເຊັ່ນ ຂໍ້ຈຳກັດດ້ານຄວາມປອດໄພໃນການເຄື່ອນໄຫວ ແລະ ການດຳເນີນກິດຈະກຳໂດຍກົງໃນຂັ້ນທ້ອງຖິ່ນ. ພ້ອມນັ້ນ ກໍ່ຍັງກ່ຽວຂ້ອງກັບລະດັບຂອງໂຄງການ ທີ່ດຳເນີນໃນແຕ່ລະປະເທດອີກດ້ວຍ. ຕໍ່ກັບຂໍ້ຫຍຸ້ງຍາກດັ່ງກ່າວ ບາງສ່ວນແມ່ນໄດ້ມີການດຳເນີນການສຳພາດ ບັນດາຜູ້ທີ່ມີສ່ວນກ່ຽວຂ້ອງກັບໂຄງການຜ່ານຊ່ອງທາງອອນລາຍ ໃນບາງພື້ນທີ່ ຫຼື ໃນປະເທດທີ່ມີຂໍ້ຈຳກັດ.
- ຍັງຄົງມີຄວາມຫຍຸ້ງຍາກໃນການໄດ້ຮັບຂໍ້ມູນຈາກພາກເອກະຊົນ ເຊິ່ງຂໍ້ຈຳກັດນີ້ແມ່ນໄດ້ມີການສະເໜີມາຕະຫຼອດ ໃນຊ່ວງຂອງການດຳເນີນໂຄງການ IP2 (ລວມເຖິງ ໃນຊ່ວງຂອງໂຄງການ IP1 ດ້ວຍ).
- ສາມາດສຳພາດ ພາກສ່ວນທີ່ເປັນຕົວແທນຈາກພາກລັດໄດ້ໜ້ອຍກວ່າທີ່ຄາດຫວັງໄວ້; ເຖິງຢ່າງໃດກໍ່ຕາມ ມີຫຼາຍຂໍ້ມູນທີ່ສຳຄັນທີ່ໄດ້ຮັບ ຈາກການສຳພາດພະນັກງານຂັ້ນທ້ອງຖິ່ນ ຢູ່ໃນປະເທດລາວ ແລະ ຫວຽດນາມ ແລະ ຈາກພະນັກ ງານຂັ້ນສູນກາງ ໃນປະເທດກຳປູເຈຍ.
- ມີບາງພາກສ່ວນແມ່ນບໍ່ໄດ້ຮັບຂໍ້ມູນ ຫຼັງຈາກທີ່ໄດ້ຕິດຕໍ່ຂໍສຳພາດ ເຊິ່ງສ່ວນໃຫຍ່ແມ່ນ ບຸກຄົນ ຫຼື ອົງກອນທີ່ກ່ຽວ ຂ້ອງກັບການດຳເນີນກິດຈະກຳຂອງໂຄງການ IP2 ໃນລະດັບພາກພື້ນ; ແລະ 2 ທ່ານຈາກພາກລັດ ທີ່ເປັນບຸກຄົນສຳຄັນໃນໜ່ວຍງານລັດຖະບານຂັ້ນສູນກາງ (ທີ່ກ່ຽວຂ້ອງກັບໂຄງການ IP2).
- ທີມປະເມີນໂຄງການໃນຄັ້ງນີ້ ແມ່ນບໍ່ສາມາດພົບປະກັນໄດ້ແບບເຊິ່ງໜ້າກັບທຸກພາກສ່ວນໃນຊ່ວງຂອງການດຳເນີນການປະເມີນ ເນື່ອງຈາກມີຂໍ້ຈຳກັດທາງດ້ານໄລຍະເວລາ ແລະ ງົບປະມານ. ເຖິງຢ່າງໃດກໍ່ຕາມທີມປະເມີນ ແມ່ນສາມາດເຮັດວຽກຮ່ວມກັນໄດ້ດີ ຜ່ານການສົນທະນາທາງໄກ (ອອນລາຍ), ການປະສານງານກັນຜ່ານທາງສື່ ທີ່ສາມາດສົ່ງຂໍ້ມູນໃນຮູບແບບຂອງສຽງ ແລະ ການຂຽນໄດ້.

**ການທົບທວນຄືນເອກະສານທີ່ກ່ຽວຂ້ອງ:** ຜ່ານການຄົ້ນຄວ້າເອກະສານຕ່າງໆທີ່ມີພາຍໃຕ້ ໂຄງການ IP2 ແມ່ນເຫັນວ່າ ມີລາຍລະ ອຽດ ແລະ ຄົບຖ້ວນຫຼາຍກວ່າ ໂຄງການໄລຍະທຳອິດ (ໃນຊ່ວງປີ 2016-2020) ແລະ ມີການວິເຄາະທີ່ເຈາະເລິກຫຼາຍຂຶ້ນ. ໂດຍສະເພາະ ຂໍ້ມູນທີ່ມີສ່ວນສຳຄັນຫຼາຍຕໍ່ກັບການກຳນົດທິດທາງ ໃນການປະເມີນຄັ້ງນີ້ແມ່ນ ບົດລາຍງານການວິເຄາະດ້ານທາງເສດຖະສາດການເມືອງ (PEA) ຂອງບັນດາປະເທດທີ່ມີ ການດຳເນີນໂຄງການ IP2 ໃນພາກພື້ນລຸ່ມແມ່ນ້ຳຂອງ ທັງຈາກຕົ້ນສະບັບ ແລະ ສະບັບປັບປຸງທີ່ຫາກໍ່ເຜີຍແຜ່ໃນເດືອນ ພຶດສະພາ ປີ 2024 ທີ່ຜ່ານມານີ້. ພ້ອມນັ້ນ ກໍ່ຍັງມີເອກະສານທີ່ສຳຄັນຫຼາຍສະບັບທີ່ກ່ຽວຂ້ອງກັບ ການວາງແຜນ ວຽກງານ ຄວາມສະເໝີພາບທາງດ້ານບົດບາດ ຍິງ-ຊາຍ, ການມີສ່ວນຮ່ວມຂອງຄົນພິການ ແລະ ສັງຄົມ (GEDSI) ແລະ ການນຳໃຊ້ ວິທີການປະເມີນການປ່ຽນແປງທີ່ເປັນຜົນໄດ້ຮັບຈາກໂຄງການ (Outcome Harvesting) ໃຫ້ເປັນສ່ວນ ໜຶ່ງຂອງກອບວຽກງານການຕິດຕາມ, ປະເມີນຜົນ, ຄວາມຮັບຜິດຊອບ ແລະ ການຮຽນຮູ້ (MEAL). ອົງປະກອບທີ່ສຳ ຄັນ ຕໍ່ກັບສະຖານະພາບ ແລະ ການຈັດຕັ້ງປະຕິບັດທີ່ພົ້ນເດັ່ນ ຈາກການທົບທວນເອກະສານທີ່ກ່ຽວຂ້ອງກັບໂຄງການ ແມ່ນປະກອບມີ ທ່າອ່ຽງໃນການຄວບຄຸມຂອງພາກລັດ ທີ່ນັບມື້ນັບຫຼາຍຂຶ້ນ, ການກຳອຳນາດໄວ້ໃນຂັ້ນສູນກາງ ທີ່ນັບມື້ ນັບທະວີຄູນຂຶ້ນ ໃນທົ່ວພາກພື້ນ ເຊິ່ງສົ່ງຜົນໃຫ້ມີຂໍ້ຈຳກັດຫຼາຍຂຶ້ນ ສຳລັບພື້ນທີ່ຂອງພາກປະຊາສັງຄົມ, ຄວາມສາມາດ ໃນການຄົງຢູ່ ແລະ ຄວາມຄິດສ້າງສັນ ຂອງອົງການຈັດຕັ້ງທາງສັງຄົມ ຈາກສະພາບແວດລ້ອມທີ່ມີການປ່ຽນແປງ ແລະ ລະດັບຄວາມຢືດຢຸ່ນ ຂອງຄູ່ຮ່ວມງານອົງການ IR, Oxfam ແລະ ໂຄງການ IP2 ໃນການດຳເນີນງານຜ່ານຊ່ອງທາງທີ່ມີ ຢູ່. ໃນການປະກົດຕົວຂອງ ເທັກໂນໂລຢີໃໝ່ ເພື່ອຜະລິດພະລັງງານໝູນວຽນ ຫຼື ພະລັງງານທາງເລືອກໃໝ່ ທີ່ບໍ່ແມ່ນ ພະລັງງານທີ່ສ້າງຈາກເຂື່ອນໄຟຟ້າ ຖືເປັນນິມິດໝາຍໜຶ່ງທີ່ສຳຄັນ ທີ່ອາດຈະມາແທນທີ່ ພະລັງງານທີ່ສ້າງຈາກແຫຼ່ງນ້ຳ (ເຂື່ອນໄຟຟ້າ) ແລະ ເຊື້ອເພີງ ເຊິ່ງກໍ່ເປັນຜົນເນື່ອງມາຈາກການຮັບຮູ້ທີ່ເພີ່ມຂຶ້ນ ຂອງໜ່ວຍງານພາກລັດ ແລະ ມວນຊົນ ຕໍ່ກັບຜົນກະທົບການດຳເນີນໂຄງການດັ່ງກ່າວ ຕໍ່ການປ່ຽນແປງດິນຟ້າອາກາດ, ຕໍ່ກັບລະບົບນິເວດຂອງແມ່ນ້ຳ ແລະ ລະບົບນິເວດອື່ນໆດ້ວຍ.

ໃນການປະເມີນ ໄດ້ມີການສອບຖາມໂດຍໃສ່ເຖິງ ທິດສະດີແຫ່ງການປ່ຽນແປງ (ToC) ແລະ ທິດສະດີ ການປະຕິບັດ (ToA) ໂດຍອີງໃສ່ຜົນ ໄດ້ຮັບທີ່ໄດ້ຈາກ ບົດລາຍງານການວິເຄາະເສດຖະສາດການເມືອງ (PEA) ທັງຈາກຕົ້ນສະບັບ ແລະ ສະບັບປັບ ປຸງໃໝ່ ແລະ ຂໍ້ມູນທີ່ເປັນ ປະສົບການຂອງການຈັດຕັ້ງປະຕິບັດໂຄງການ ຜ່ານການສຳພາດບັນດາບຸກຄົນທີ່ກ່ຽວຂ້ອງ. ລາຍລະ ອຽດຂອງແຕ່ລະອົງປະກອບແມ່ນ ໄດ້ ມີການນຳສະເໜີຢູ່ໃນແຕ່ລະແຜນງານຂອງຄາດໝາຍໂຄງການ ເຊິ່ງໄດ້ນຳສະເໜີລາຍລະ ອຽດຢູ່ໃນພາກຜົນໄດ້ຮັບຂອງການປະເມີນ. ໂດຍ ລວມເຫັນວ່າ ຍຸດທະສາດທີ່ຖືກເລືອກນຳມາໃຊ້ໃນການຈັດຕັ້ງປະຕິບັດໂຄງ ການ ແມ່ນມີຄວາມແທດເໝາະ ແລະ ມີການດຳເນີນທີ່ຄຳນຶງເຖິງ ຄວາມລະອຽດອ່ອນ ຂອງລາຍລະອຽດຕ່າງໆຢ່າງຮອບຄອບ; ແຕ່ໃນຂະນະດຽວກັນ ກໍ່ຍັງມີຄວາມຢືດຢຸ່ນ. ຈາກຜົນການປະເມີນສະແດງໃຫ້ ເຫັນວ່າມີຄວາມຄືບໜ້າ ໃນທັງ 3 ຄາດໝາຍທີ່ກຳນົດຂຶ້ນມາ; ແຕ່ໃນຄາດໝາຍທີ 3 ທີ່ລະບຸເຖິງ ‘ຄວາມມຸ້ງໝັ້ນໃນການບັນລຸ ຕໍ່ກັບການສ້າງ ການປ່ຽນແປງທີ່ສຳຄັນໃນການກະຕຸ້ນພາກລັດ ແລະ ເອກະຊົນ ໃນການປະຕິບັດຕາມ ມາດຕະຖານສາກົນ ໃນການຜະລິດພະລັງງານຈາກ ເຂື່ອນໄຟຟ້າ ແລະ ພະລັງງານ ໝູນວຽນອື່ນໆ’ ເຫັນວ່າມີທ່າອ່ຽງໄປໃນທິດທາງທີ່ດີຂຶ້ນ ໃນສະພາບການປ່ຽນແປງທາງດ້ານການເມືອງ ແລະ ເສດຖະກິດທີ່ເກີດຂຶ້ນຢູ່ໃນພາກພື້ນນີ້ ແລະ ໃນກອບເວລາຂອງໂຄງການ IP2 ເຊິ່ງໃນເບື້ອງຕົ້ນ ຄາດໝາຍນີ້ແມ່ນໄດ້ວາງໄວ້ວ່າ ຈະໃຊ້ເວລາ 8 ປີ ເພື່ອໃຫ້ບັນລຸ ເຊິ່ງຄາດວ່າຈະມີຄວາມຄືບໜ້າເພີ່ມຕື່ມໃນອະນາຄົດມໍ່ໆນີ້.

## ຂໍ້ສັງເກດ ແລະ ຜົນໄດ້ຮັບ ແຕ່ລະຄາດໝາຍທີ່ສຳຄັນແມ່ນມີລາຍລະອຽດດັ່ງຕໍ່ໄປນີ້:

**ຄາດໝາຍທີ 1**

## ຜູ້ນຳທີ່ເປັນແມ່ຍິງ ແລະ ບັນດາຕົວແທນ ຈາກກຸ່ມດ້ອຍໂອກາດໃນສັງຄົມ ແມ່ນມີບົດບາດສຳຄັນໃນການເປັນຜູ້ນຳ ເພື່ອຂໍສະໜັບສະໜູນພາກສ່ວນທີ່ກ່ຽວຂ້ອງຈາກລະດັບປະເທດ, ພາກພື້ນ ແລະ ໜ່ວຍງານອື່ນໆທີ່ບໍ່ໄດ້ສັງກັດໃນພາກລັດ ເພື່ອໃຫ້ເຂົາເຈົ້າໄດ້ມີສ່ວນຮ່ວມໃນການຄຸ້ມຄອງຊັບພະຍາກອນນ້ຳ, ການອອກແບບນະໂຍບາຍທາງດ້ານພະລັງງານ ລວມເຖິງຂະບວນການວາງແຜນຕ່າງໆ.

ຈາກຜົນການປະເມີນເຫັນວ່າ ໂຄງການ IP2 ແມ່ນສາມາດບັນລຸຫຼາຍດ້ານ ເຊິ່ງມີຜົນສຳເລັດໃນລະດັບສູງ ຕໍ່ກັບຄາດໝາຍນີ້ ເຖິງແມ່ນວ່າລະດັບຂອງຜົນສຳເລັດແມ່ນຈະມີຄວາມແຕກຕ່າງກັນໃນແຕ່ລະປະເທດ ໃນພາກພື້ນນີ້ກໍ່ຕາມ. ສືບເນື່ອງມາຈາກໂຄງການ IP1 ແລະ ການສົ່ງເສີມການເປັນຜູ້ນຳຂອງແມ່ຍິງ ມາຕັ້ງແຕ່ເລີ່ມຕົ້ນ ແມ່ນສະແດງໃຫ້ເຫັນວ່າ ໄດ້ຮັບຜົນສຳເລັດຢ່າງເປັນຮູບປະທຳຫຼາຍຂຶ້ນ ພາກໃຕ້ການດຳເນີນໂຄງການ IP2. ພ້ອມນັ້ນ ບັນດາຄູ່ຮ່ວມງານ ແລະ ຊຸມຊົນ ກໍ່ໄດ້ມີການໝູນໃຊ້ ບັນດາແນວທາງ ແລະ ຍຸດທະສາດໃໝ່ໆໃນການຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນ ໂດຍສະເພາະຜ່ານການເຮັດບົດວິໄຈທີ່ເນັ້ນການປະຕິບັດຕົວຈິງໃນຂັ້ນຊຸມຊົນດ້ວຍຮູບແບບຕ່າງໆເຊັ່ນ: ການຄົ້ນຄວ້າທີ່ເນັ້ນການປະຕິບັດແບບມີສ່ວນຮ່ວມໂດຍໃຊ້ຫຼັກການແນວຄວາມຄິດສະຕຣີນິຍົມ (FPAR) ຢູ່ໃນປະເທດກຳປູເຈຍ, ການເຮັດບົດວິໄຈຊາວບ້ານ (ການຄົ້ນຄວ້າໂດຍຊາວບ້ານ) ຢູ່ໃນປະເທດລາວ, ບົດວິໄຈໄທບ້ານ ຢູ່ປະເທດໄທ ແລະ ການດຳເນີນບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມໂດຍຊຸມຊົນ ຕໍ່ກັບໂຄງການຜັນແມ່ນ້ຳຍົມ/ແມ່ນ້ຳສາລະວິນ. ບັນດາຄູ່ຮ່ວມງານ, ຊຸມຊົນ ແລະ ພາກສ່ວນອື່ນໆ ທີ່ມີສ່ວນຮ່ວມຕໍ່ກັບບັນດາກິດຈະກຳຂອງໂຄງການ ໃຫ້ຮູ້ວ່າມີການປ່ຽນແປງຫຼາຍ ຕໍ່ກັບບົດບາດ ແລະ ຄວາມໝັ້ນໃຈຂອງແມ່ຍິງໃນການເປັນຜູ້ນຳ, ການສ້າງຄວາມສາມັກຄີປອງດອງພາຍໃນຊຸມຊົນ ແລະ ຂີດຄວາມສາມາດຂອງຊຸມຊົນໃນການສະແດງຄວາມກັງວົນ ແລະ ການລົນນະລົງຂົນຂວາຍທີ່ມີຄວາມເປັນເອກະພາບກັນຂອງຈຸດຢືນຕົນ ຕໍ່ກັບບັນດາໜ່ວຍງານທີ່ກ່ຽວຂ້ອງ. ໃນການດຳເນີນ FPAR ແລະ ການຄົ້ນຄວ້າທີ່ເນັ້ນການປະຕິບັດຂັ້ນຊຸມຊົນຜ່ານຮູບແບບຕ່າງໆຢ່າງມີຍຸດທະສາດທີ່ຄວບຄຸມຮອບດ້ານນັ້ນ ແມ່ນມີສ່ວນເສີມສ້າງຄວາມເຂັ້ມແຂງໃຫ້ກັບແມ່ຍິງໃນການປັບຕົວ ແລະ ໃຫ້ສາມາດພັດທະນາສັກກະຍາພາບໃນການເປັນຜູ້ນຳໄດ້ຢ່າງຕໍ່ເນື່ອງ ໂດຍຄຳນຶງເຖິງສະພາບຄວາມເປັນຈິງຕໍ່ກັບບົດບາດ ແລະ ສະຖານະທາງສັງຄົມຂອງແມ່ຍິງ.  ການດຳເນີນຍຸດທະສາດດັ່ງກ່າວແມ່ນມີຄວາມໂດດເດັ່ນ ເຊິ່ງສະແດງອອກ ຈາກຜົນສຳເລັດໃນການກ້າວໄປສູ່ຄວາມສາມາດໃນການສ້າງຕັ້ງເຄືອຂ່າຍຜູ້ນຳແມ່ຍິງ ທັງໃນລະດັບປະເທດ ແລະ ພາກພື້ນ.




Asia Women and Rivers Congress in Chaing Rai, Thailand



Women of Kon Mom community fishery in Cambodia

ມີຄວາມຄືບໜ້າຫຼາຍຢ່າງຕໍ່ກັບການໝູນໃຊ້ ບົດລາຍງານ ຫຼື ບົດວິເຄາະຜົນກະທົບທາງດ້ານບົດບາດ ຍິງ-ຊາຍ ເຂົ້າໃນການດຳເນີນວຽກງານຂອງອົງການຈັດຕັ້ງທາງສັງຄົມ ແລະ ຄູ່ຮ່ວມງານອື່ນໆ; ພ້ອມນັ້ນ ໜ່ວຍງານພາກລັດ ແລະ ພາກເອກະຊົນ ກໍ່ໄດ້ມີການນຳໃຊ້ ຄູ່ມື ການປະເມີນຜົນກະທົບທາງບົດບາດ ຍິງ-ຊາຍ ເຂົ້າໃນແຜນວຽກ ແລະ ຍຸດທະສາດຂອງເຂົາເຈົ້າ; ເຖິງຢ່າງໃດກໍ່ຕາມຍັງເຫັນວ່າ ການບັນລຸແມ່ນຕ່ຳກວ່າຄາດໝາຍທີ່ຕັ້ງໄວ້ໃນເບື້ອງຕົ້ນ.

ໃນການດຳເນີນປະຕິບັດໂຄງການເຫັນວ່າ ສາມາດສ້າງການມີສ່ວນຮ່ວມຂອງແມ່ຍິງໄວໜຸ່ມ ແລະ ຊົນເຜົ່າໄດ້ຫຼາຍຂຶ້ນ ໃນອົງການ ຈັດຕັ້ງຂອງຊຸມຊົນ ແລະ ການເປັນຜູ້ນຳ ໂດຍໄດ້ຍຶດຖືຫຼັກການ ການວິເຄາະອຳນາດທັບຊ້ອນເຂົ້າໃນການດຳເນີນງານ. ການບັນລຸເປົ້າໝາຍ ໃນການສ້າງການມີສ່ວນຮ່ວມຂອງຄົນພິການ ແລະ ກຸ່ມຄົນຫຼາກຫຼາຍທາງດ້ານເພດ ແລະ ສະຖານະທາງເພດ ຫຼື ລົດສະນິຍົມທາງເພດ (SOGIE) ແມ່ນເຫັນວ່າຍັງບໍ່ທັນທົ່ວເຖິງຢ່າງຮອບດ້ານເທື່ອ ແຕ່ກໍ່ເປັນການລິເລີ່ມທີ່ດີ ແລະ ໄດ້ຮັບຜົນສຳເລັດໃນລະດັບໜຶ່ງ ເຊິ່ງສິ່ງດັ່ງກ່າວແມ່ນເປັນພື້ນຖານທີ່ດີເພື່ອເປັນແນວທາງນຳໄປສູ່ການປະຕິບັດໃຫ້ດີຂຶ້ນໃນອະນາຄົດ.

ຜົນສຳເລັດທີ່ເກີດຂຶ້ນແມ່ນອາດບໍ່ມີຄວາມສົມດູນກັນໃນທົ່ວພາກພື້ນ ເນື່ອງຈາກປັດໄຈຕ່າງໆເຊັ່ນ ການຄວບຄຸມ ຫຼື ການຈຳກັດພື້ນທີ່ ຂອງພາກລັດຕໍ່ກັບການດຳເນີນກິດຈະກຳ ຫຼື ການຈັດຝຶກອົບຮົມຕ່າງໆ, ຄວາມປອດໄພ ແລະ ລະດັບຄວາມເຂົ້າໃຈທີ່ມີຢູ່ ກ່ຽວກັບຫຼັກການຄວາມທ່ຽງທຳທາງດ້ານບົດບາດ ຍິງ-ຊາຍ ຂອງບັນດາຄູ່ຮ່ວມງານ ແລະ ຊຸມຊົນ. ນອກຈາກນີ້ ກໍ່ຍັງສັງເກດເຫັນວ່າ ການມີສ່ວນຮ່ວມຂອງຜູ້ນຳທີ່ເປັນແມ່ຍິງ ຕໍ່ກັບໜ່ວຍງານພາກລັດ ແລະ ພາກສ່ວນອື່ນໆ ໃນວຽກງານຄຸ້ມຄອງຊັບພະຍາກອນນ້ຳແມ່ນມີບາດກ້າວທີ່ສຳຄັນ ໃນລະດັບຊຸມຊົນ, ເມືອງ ຫຼື ແຂວງ ທີ່ຢູ່ພາຍໃນປະເທດ ເຊິ່ງກໍ່ເຫັນໄດ້ເຖິງບາງຜົນໄດ້ສຳເລັດທີ່ມີຄວາມ ໝາຍຄວາມສຳຄັນ ຕໍ່ກັບການປະຕິບັດຕົວຈິງໃນການເຊື່ອມສານເອົາອົງຄວາມຮູ້ ແລະ ຄວາມກັງວົນຂອງຊຸມຊົນທ້ອງຖິ່ນ ເຂົ້າໃນວຽກງານຊຸກຍູ້ຂົນຂວາຍໃນຂັ້ນນະໂຍບາຍ ທັງໃນລະດັບປະເທດ ແລະ ພາກພື້ນ. ບົດຮຽນຈາກປະເທດໄທ ສະແດງໃຫ້ເຫັນເຖິງ ບົດບາດທີ່ສຳຄັນຂອງຜູ້ນຳແມ່ຍິງ ທີ່ເປັນຄູ່ຮ່ວມງານ ແລະ ຕົວແທນຂອງຊຸມຊົນ ທີ່ສາມາດກ້າວສູ່ແຖວໜ້າໃນລະດັບປະເທດ ເພີ່ມຫຼາຍຂຶ້ນ ທັງໃນເວທີຂອງພາກລັດ, ເອກະຊົນ ແລະ ສະຖາບັນອື່ນໆ. ຜົນສຳເລັດດັ່ງກ່າວ ແມ່ນສືບເນື່ອງມາຈາກປະຫວັດສາດອັນຍາວນານ ໃນການສ້າງຄວາມເຂັ້ມແຂງໃນຂັ້ນຊຸມຊົນ ແລະ ການມີພື້ນທີ່ທີ່ອຳນວຍຄວາມສະດວກ ໃນສະແດງຄວາມຄິດເຫັນ ແລະ ການກະຕຸ້ນທາງດ້ານນະໂຍບາຍ. ເພື່ອເຮັດໃຫ້ມີຄວາມສອດຄ່ອງຫຼາຍຂຶ້ນ ການສ້າງຄວາມເຊື່ອມໂຍງ ແລະ ອັດຊ່ອງວ່າງ ກົນໄກການມີສ່ວນຮ່ວມ ແລະ ການຊຸກຍູ້ຂົນຂວາຍທາງດ້ານນະໂຍບາຍ ທັງໃນລະດັບປະເທດ ແລະ ພາກພື້ນແມ່ນຄວນເປັນວຽກບູລິມາສິດ ເພື່ອສົ່ງເສີມການມີສ່ວນຮ່ວມໃຫ້ມີປະສິດທິພາບຫຼາຍຂຶ້ນ ຕໍ່ກັບການຄຸ້ມຄອງຊັບພະຍາກອນນ້ຳໃນອະນາຄົດ.

**ຄາດໝາຍທີ 2**

## ຊຸມຊົນທີ່ດຳລົງຊີວິດລຽບຕາມແມ່ນ້ຳ ແລະ ອົງການຈັດຕັ້ງທາງສັງຄົມ ມີສ່ວນຮ່ວມໃນການກຳນົດນະໂຍບາຍ ແລະ ຂະບວນການວາງແຜນກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳ ທັງໃນລະດັບທ້ອງຖິ່ນ, ປະເທດ ແລະ ພາກພື້ນ; ພ້ອມທັງສົ່ງເສີມການໄດ້ຮັບຜົນປະໂຫຍດ ແລະ ສົ່ງເສີມທາງດ້ານສິດຂອງບັນດາກຸ່ມຄົນທີ່ດ້ອຍໂອກາດ.

ການມີສ່ວນຮ່ວມໂດຍກົງໃນການກຳນົດນະໂຍບາຍ ແລະ ຂະບວນການວາງແຜນກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳ ໃນລະ ດັບທ້ອງຖິ່ນ, ປະເທດ ແລະ ພາກພື້ນ ແມ່ນໄດ້ຮັບການຊຸກຍູ້ສົ່ງເສີມຢ່າງໃກ້ສິດ ແລະ ມີຄວາມສະໝ່ຳສະເໝີ ໃນຕະຫຼອດການ ດຳເນີນໂຄງການ IP2. ເຖິງຢ່າງໃດກໍ່ຕາມ ໃນປັດຈຸບັນຍັງເປັນເລື່ອງຍາກທີ່ຈະປະເມີນໄດ້ຢ່າງຊັດເຈນວ່າ ຜົນໄດ້ຮັບຂອງວຽກງານການຊຸກຍູ້ຂົນຂວາຍແມ່ນຢູ່ໃນລະດັບໃດ. ເຊັ່ນດຽວກັນກັບຄາດໝາຍທີ 1, ການມີສ່ວນຮ່ວມທີ່ເຫັນໄດ້ຊັດເຈນທີ່ສຸດ ແມ່ນຢູ່ໃນລະຫວ່າງ ລະດັບຂັ້ນທ້ອງຖິ່ນ, ຂັ້ນເມືອງ ຫຼື ຂັ້ນແຂວງ. ສະນັ້ນເມື່ອສັງເກດຜົນຂອງການມີສ່ວນຮ່ວມໃນແຕ່ລະຂັ້ນດັ່ງກ່າວ ສາມາດເວົ້າໄດ້ວ່າ ໂຄງການແມ່ນສາມາດບັນລຸຕາມຄາດໝາຍນີ້ໄດ້ໃນລະດັບໃດໜຶ່ງ. ການມີສ່ວນຮ່ວມໂດຍກົງຂອງຊຸມຊົນທ້ອງ ຖິ່ນ ແລະ ອົງການຈັດຕັ້ງທາງສັງຄົມ ໃນລະດັບ ຂັ້ນສູນກາງ ແລະ ລະດັບຂັ້ນຕ່າງໆ ກໍ່ມີບາດກ້າວທີ່ສຳຄັນ; ເຊິ່ງສິ່ງທີ່ມີຄວາມຄືບໜ້າຢ່າງມີຄວາມສຳຄັນກໍ່ຄື ການບັນລຸ




learning exchange on communication action research in Cambodia

ໃນການເຊື່ອມໂຍງ ແຕ່ທ້ອງຖິ່ນ ຫາ ສູນກາງ ແລະ ພາກພື້ນ ໂດຍບັນດາອົງການ ຈັດຕັ້ງທາງສັງຄົມແມ່ນມີບົດບາດສຳຄັນໃນການບັນລຸດັ່ງກ່າວ ໂດຍສະເພາະແມ່ນການສົ່ງເສີມພື້ນທີ່ແກ່ບັນດາແມ່ຍິງ ແລະ ຜູ້ນຳຂັ້ນຊຸມຊົນຕ່າງໆ ໃຫ້ສາມາດເຂົ້າຮ່ວມໃນເວທີລະດັບສູນກາງ ແລະ ພາກພື້ນໄດ້.




Nine journalists from Thailand, Cambodia, Laos, Myanmar and Vietnam have been trained in reporting on GEDSI issues in water governance in October 2023, Thailand.

**ໃນການປະເມີນຄັ້ງນີ້ຍັງພົບວ່າ ມີການໝູນໃຊ້ ບາງຍຸດທະສາດໃໝ່ໆ ແລະ ໄດ້ເຊື່ອມສານເຂົ້າໃນວຽກງານຫຼັກຂອງການດຳເນີນໂຄງການ ໂດຍສະເພາະແມ່ນນຳໃຊ້ເພື່ອປະເມີນວ່າ ຊ່ອງທາງໃດທີ່ມີຄວາມເປັນໄປໄດ້ທີ່ສຸດໃນການມີສ່ວນຮ່ວມ ແລະ ຊ່ອງທາງໃດທີ່ຈະໄດ້ເຫັນຜົນຫຼາຍທີ່ສຸດ. ເຊິ່ງສາມາດສະຫຼຸບລາຍລະອຽດໄດ້ດັ່ງນີ້:**

- ການນຳໃຊ້ທັງສື່ແບບເກົ່າ ແລະ ແບບໃໝ່ ແມ່ນເຫັນວ່າໄດ້ຮັບຜົນດີພໍສົມຄວນ ເພື່ອເປັນການກະຈາຍສຽງຂອງຊຸມຊົນ ເຊິ່ງໃນນັ້ນລວມເຖິງ ການນຳສະເໜີຂໍ້ມູນໂດຍຫຍໍ້ຢ່າງເປັນປະຈຳ, ການຈັດທັດສະນະສຶກສາສຳລັບສື່ ແລະ ການຈັດຝຶກອົບຮົມສະເພາະສຳລັບນັກຂ່າວ ໂດຍອີງໃສ່ສະພາບການເປີດກວ້າງຂອງສື່ ແລະ ການມີສ່ວນຮ່ວມກັບກິດຈະກຳ ທີ່ໂຄງການ IP2 ສະໜັບສະໜູນເຊັ່ນ ລາຍການສຽງຂອງແມ່ຍິງ (Women On Air) ທາງວິທະຍຸກະຈາຍສຽງແມ່ຍິງ (Women's Voice Radio) ເຊິ່ງເປັນລາຍການວິທະຍຸ ອິດສະຫຼະແຫຼ່ງໜຶ່ງ ທີ່ອອກອາກາດຢູ່ໃນປະເທດກຳປູເຈຍ ໂດຍມີເປົ້າໝາຍເພື່ອຊຸກຍູ້ສົ່ງເສີມໃຫ້ເກີດມີພື້ນທີ່ໃນການສົ່ງສຽງ ໃນສະພາບທີ່ສື່ມີພື້ນທີ່ຈຳກັດ ແລະ ເພື່ອເປັນການສະໜອງພື້ນທີ່ແກ່ຜູ້ນຳແມ່ຍິງຈາກຊຸມຊົນຕ່າງໆ ໃຫ້ສາມາດໃຊ້ເປັນສື່ກາງໃນການນຳສະເໜີຂໍ້ມູນ ແລະ ຄວາມກັງວົນຂອງເຂົາເຈົ້າ ຕໍ່ກັບສາທາລະນະໄດ້. ໃນຂະນະດຽວກັນ ການມີສື່ສັງຄົມອອນລາຍກໍ່ໄດ້ຂະຫຍາຍຊ່ອງທາງໃໝ່ໃນການຂັບເຄື່ອນ 'ການຂົນຂວາຍທີ່ສ້າງການປ່ຽນແປງທາງດ້ານແນວຄວາມຄິດ' ເຊິ່ງເຫັນວ່າ ພາກລັດເອງກໍ່ມີຄວາມລະມັດລະວັງຫຼາຍຂຶ້ນຕໍ່ກັບຄວາມຄິດເຫັນຂອງສາທາລະນະຕໍ່ກັບ ແນວທາງປະຕິບັດຂອງລັດຖະບານ ເຖິງແມ່ນວ່າຈະຢູ່ໃນລະບົບການເມືອງທີ່ບໍ່ໄດ້ມີຄວາມເປັນປະຊາທິປະໄຕເອງກໍ່ຕາມ.
- ຄວາມສຳຄັນໃນການສ້າງຖານຂໍ້ມູນ ເພື່ອເປັນຫຼັກຖານທີ່ກ່ຽວຂ້ອງກັບການດຳເນີນກິດຈະກຳ ໂດຍການເຊື່ອມສານການຄົ້ນຄວ້າທີ່ເນັ້ນການປະຕິບັດຂັ້ນຊຸມຊົນ ເຊັ່ນ: ການດຳເນີນ FPAR, ການເຮັດບົດວິໄຈຊາວບ້ານ ແລະ ການດຳເນີນບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມໂດຍຊຸມຊົນ  ລວມເຖິງ ການເຮັດວຽກຮ່ວມມືກັບບັນດາສະຖາບັນວິຊາການ ແລະ ໜ່ວຍງານຄົ້ນຄວ້າຂອງພາກລັດ ແລ້ວນຳໃຊ້ຖານຂໍ້ມູນດັ່ງກ່າວນັ້ນເປັນບ່ອນອີງໃນຂະບວນການມີສ່ວນຮ່ວມ.
- ເສີມສ້າງສາຍພົວພັນຢ່າງເລິກເຊິ່ງ ແລະ ສະໝໍ່າສະເໝີ ກັບກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ ຫຼື MRC (ລວມເຖິງຄູ່ຮ່ວມພັດທະນາຂອງ MRC ໂດຍສະເພາະແມ່ນ ກົນໄກ ຈອຍກາ ຫຼື TROIKA) ແລະ ກອງເລຂາຄະນະກຳມະການແມ່ນ້ຳຂອງແຫ່ງປະເທດກຳປູເຈຍ ເນື່ອງຈາກທັງສອງໜ່ວຍງານນີ້ ແມ່ນຄ່ອນຂ້າງເປີດກວ້າງສຳລັບການມີສ່ວນຮ່ວມຂອງພາກປະຊາສັງຄົມ. ການມີສ່ວນຮ່ວມ ແລະ ບົດບາດຂອງ ອົງການ IR, Oxfam ແລະ ບັນດາຄູ່ຮ່ວມງານແມ່ນມີສ່ວນສຳຄັນເຮັດໃຫ້ມີພື້ນທີ່ກວ້າງຂວາງຫຼາຍຂຶ້ນສຳລັບການສົ່ງເສີມການມີສ່ວນຮ່ວມ ລວມເຖິງມາຈາກການກະຕຸ້ນຂອງບາງຜູ້ໃຫ້ທຶນຂອງ MRC ດ້ວຍ.

ຄາດໝາຍທີ 3

## ໜ່ວຍງານພາກລັດ ແລະ ພາກເອກະຊົນທີ່ກ່ຽວຂ້ອງ ທັງໃນລະດັບປະເທດ ແລະ ພາກພື້ນ ຮັບປະກັນການ ປະຕິບັດຕາມມາດຕະຖານ ແລະ ການປະຕິບັດທີ່ດີ ຂອງພາກພື້ນ ແລະ ສາກົນໃຫ້ຫຼາຍຂຶ້ນ; ພ້ອມນັ້ນ ມີການຮວບຮວມເອົາຄໍາຄິດເຫັນຂອງພາກປະຊາສັງຄົມປະກອບເຂົ້າໃນນະໂຍບາຍ ແລະ ແຜນພັດທະນາພະລັງງານເຂື່ອນໄຟຟ້າ ແລະ ພະລັງງານທາງເລືອກໃໝ່ດ້ວຍ.




Mekong Fair in Chiang Kong where a representative from Chinese Embassy was on the panel with Thai academics and Thai Member of the parliament in December 2023

ຈາກການທົບທວນຄືນບັນດາເອກະສານທີ່ກ່ຽວຂ້ອງ ແລະ ການສໍາພາດບັນດາຜູ້ທີ່ມີສ່ວນຮ່ວມທີ່ສໍາຄັນຂອງໂຄງການ ແມ່ນມີຫຼັກຖານພຽງເລັກນ້ອຍເທົ່ານັ້ນ ທີ່ຊີ້ໃຫ້ເຫັນເຖິງຄວາມຄືບໜ້າໃນການປະຕິບັດຕາມມາດຕະຖານພາກພື້ນ ແລະ ສາກົນ ຂອງພາກລັດ ແລະ ພາກເອກະຊົນໃນຊ່ວງຂອງການຈັດຕັ້ງປະຕິບັດໂຄງການ IP2 ເຖິງແມ່ນວ່າ ຄາດໝາຍນີ້ໄດ້ກໍານົດໄວ້ໃນກອບໄລຍະເວລາ 8 ປີ. ເມື່ອທຽບກັບຄາດໝາຍເດີມທີ່ມີການປັບປຸງໃໝ່ ໃນຊ່ວງຂອງໄລຍະການຂະຫຍາຍກອບເວລາຂອງໂຄງການ ຕໍ່ກັບການປະຕິບັດຕາມຄໍາໝັ້ນສັນຍາ ແມ່ນເຫັນວ່າມີຄວາມຄືບໜ້າເພີ່ມຂຶ້ນກວ່າເກົ່າ ເຊິ່ງລາຍລະອຽດແມ່ນອະທິບາຍຂ້າງລຸ່ມນີ້.

ຕໍ່ກັບຄາດໝາຍນີ້ ເຫັນວ່າມີຄວາມຄືບໜ້າສໍາຄັນທີ່ມີຄວາມໂດດເດັ່ນຫຼາຍປະການທີ່ເກີດຂຶ້ນ ໃນຊ່ວງຂອງການດໍາເນີນໂຄງ ການໂດຍສະເພາະແມ່ນ ການເຮັດໃຫ້ມີຫຼາຍຊ່ອງທາງສໍາລັບການປຶກສາຫາລື ແລະ ການກະຕຸ້ນເພື່ອໃຫ້ເກີດມີການປ່ຽນແປງທາງດ້ານນະໂຍບາຍ ເຊິ່ງປະເດັນນີ້ແມ່ນສໍາຄັນຫຼາຍທີ່ຈະເປັນພື້ນຖານໃນການຕໍ່ຍອດ ເພື່ອສ້າງຈຸດຮ່ວມກັບມວນຊົນໃນການລົມນະລົງຂໍສະໜັບສະໜູນໃນອະນາຄົດ ໂດຍສະເພາະໃນປະເທດທີ່ພາກລັດມີການເປີດກວ້າງ  ກະຕຸ້ນ. ໃນຂະນະດຽວກັນ ຫຼັກຖານທີ່ຊີ້ໃຫ້ເຫັນການສ້າງເຂື່ອນພະລັງງານໄຟຟ້ານັ້ນຍັງມີຜົນກະທົບຕໍ່ຫລາຍດ້ານ  ເຊິ່ງສາມາດຍົກຂຶ້ນເປັນປະເດັນໃນການຖົກຖຽງໄດ້. ພ້ອມນັ້ນການຮັບຮູ້ ຫຼື ຄວາມກົດດັນຈາກສາທາລະນະເພື່ອໃຫ້ຫັນມາສຸມໃສ່ການພັດທະນາພະລັງງານທີ່ມີຄວາມຍືນຍົງກວ່ານັ້ນ ກໍ່ໄດ້ສິ່ງຜົນດີຕໍ່ກັບການບັນລຸຄາດໝາຍນີ້ດ້ວຍ.

## ຜົນໄດ້ຮັບທີ່ສຳຄັນຂອງຄາດໝາຍນີ້ ໃນຕະຫຼອດການປະຕິບັດໂຄງການ IP2 ແມ່ນສາມາດສະຫຼຸບໄດ້ດັ່ງນີ້:

- ຄວາມທ່ຽງທຳທາງດ້ານບົດບາດ ຍິງ-ຊາຍ ແລະ ຄວາມສະເໝີພາບທາງດ້ານບົດບາດ ຍິງ-ຊາຍ, ຄວາມສະເໝີພາບ ແລະ ການມີສ່ວນຮ່ວມຂອງຍິງ-ຊາຍ ແລະ ຄົນພິການ (GEDSI) ໄດ້ກາຍເປັນເລື່ອງທີ່ເປີດກວ້າງຫຼາຍຂຶ້ນ ໂດຍໄດ້ສ້າງເງື່ອນໄຂ ໃຫ້ມີສ່ວນຮ່ວມໃນລະດັບນະໂຍບາຍກັບພາກລັດໃນທົ່ວພາກພື້ນ ທີ່ສາມາດຄວບຄຸມຫຼາກຫຼາຍປະເດັນ.
- ເຫັນເຖິງການເປີດກວ້າງຫຼາຍຂຶ້ນ ສຳລັບທະນາຄານຂອງປະເທດໄທ ໃນການຄຳນຶງເຖິງຜົນກະທົບທາງດ້ານສິ່ງແວດ ລ້ອມ ແລະ ຄວາມສ່ຽງທາງດ້ານການເງິນ ຕໍ່ກັບການລົງທຶນໃນໂຄງການພັດທະນາເຂື່ອນພະລັງງານໄຟຟ້າ
- ເກີດມີຊ່ອງທາງໃໝ່ໆ ເພື່ອລະດົມການຂໍສະໜັບສະໜູນຈາກລັດຖະບານລາວ ເຖິງແມ່ນວ່າພື້ນທີ່ຂອງພາກປະຊາສັງ ຄົມ ຍັງມີຂໍ້ຈຳກັດຫຼາຍຢູ່
- ລັດຖະບານປະເທດກຳປູເຈຍແມ່ນໄດ້ເປີດກວ້າງຫຼາຍຂຶ້ນ ຕໍ່ກັບຂໍ້ສະເໜີລິເລີ່ມການພັດທະນາພະລັງງານທາງເລືອກ ໃໝ່ ທີ່ບໍ່ແມ່ນມາຈາກການສ້າງເຂື່ອນໄຟຟ້າ ທັງໃນລະດັບທ້ອງຖິ່ນ ແລະ ປະເທດ.
- ມີຫຼາກຫຼາຍຊ່ອງທາງທີ່ສາມາດມີສ່ວນຮ່ວມ ແລະ ກະຕຸ້ນການປ່ຽນແປງ ຈາກບັນດາສະຖາບັນ ແລະ ໜ່ວຍງານຕ່າງໆ ໃນປະເທດໄທ ໂດຍສະເພາະແມ່ນປະເດັນຂອງແຜນພັດທະນາ ແລະ ໂຄງການທີ່ກ່ຽວຂ້ອງກັບການລົງທຶນຂອງໄທໃນ ຕ່າງປະເທດ ແລະ ຜົນກະທົບຂ້າມຊາຍແດນທີ່ສົ່ງຜົນຕໍ່ກັບປະຊາຊົນໃນປະເທດໄທ.
- ໜ່ວຍງານທີ່ກ່ຽວຂ້ອງຂອງປະເທດໄທ ໄດ້ມີການຕິດຕາມ ແລະ ຍົກໃຫ້ເຫັນປະເດັນເລື່ອງຂອງຜົນກະທົບຂ້າມຊາຍແດນ ຈາກໂຄງການພັດທະນາພື້ນຖານໂຄງລ່າງທີ່ສ້າງຂຶ້ນໃນປະເທດອື່ນ ແຕ່ໄດ້ສ້າງຜົນກະທົບເຖິງປະຊາຊົນໃນປະ ເທດໄທ.



The NHRC investigative meeting on Pak Beng dam in Chiang Kong, September 2023

ໂຄງການ IP2 ແມ່ນລິເລີ່ມມີສ່ວນຮ່ວມໃນການກະຕຸ້ນດ້ານນະໂຍບາຍພະລັງງານທາງເລືອກ ທັງໃນລະດັບປະເທດ ແລະ ພາກພື້ນ ໃນປີ 2021 ແຕ່ວ່າການຈັດຕັ້ງປະຕິບັດຕົວຈິງໃນພື້ນທີ່ແມ່ນເລີ່ມຂຶ້ນໃນປີ 2023 ເທົ່ານັ້ນ; ເຊິ່ງຜົນໄດ້ຮັບຈາກການດຳເນີນວຽກງານນີ້ແມ່ນຍັງເຫັນໜ້ອຍຢູ່ໃນປັດຈຸບັນ. ເຖິງຢ່າງໃດກໍ່ດີ ມີຄວາມສຳຄັນຍິ່ງທີ່ຄວນຮັບຮູ້ວ່າ ໜ່ວຍງານປະຕິບັດແຜນງານຂອງໂຄງການ IP2 ແມ່ນໄດ້ມີສ່ວນໃນການສະໜອງຂໍ້ມູນທີ່ສຳຄັນຕໍ່ກັບການການອອກແບບ ແລະ ແນວທາງຕໍ່ກັບປະເດັນພະ ລັງງານທາງເລືອກ ໃຫ້ແກ່ຄູ່ຮ່ວມງານອື່ນໆຂອງອົງການ Oxfam ທີ່ບໍ່ໄດ້ນອນຢູ່ໃນໂຄງການ IP2 ເຊິ່ງສິ່ງດັ່ງກ່າວກໍ່ຖືວ່າເປັນການປະກອບສ່ວນຜົນໄດ້ຮັບທີ່ດີຕໍ່ກັບຄາດໝາຍຂອງໂຄງການ IP2 ໃນຂະແໜງການນີ້.

ໃນຂະນະດຽວກັນກໍ່ເຫັນວ່າ ມີຄວາມຄິດເຫັນໄປໃນທາງບວກຫຼາຍຂຶ້ນຈາກໜ່ວຍງານ ຫຼື ສະຖາບັນຕ່າງໆຕໍ່ກັບແນວທາງທີ່ອົງ ການ IR, Oxfam ແລະ ບັນດາຄູ່ຮ່ວມງານຂອງໂຄງການ IP2 ໃນການໃຊ້ຊ່ອງທາງທີ່ມີຢູ່ ແລະ ຍຸດທະສາດຕ່າງໆ ໃນການກະຕຸ້ນເລື່ອງຂອງພະລັງງານທາງເລືອກໃໝ່; ເຊິ່ງການສືບຕໍ່ການປະຕິບັດນີ້ຢ່າງຕໍ່ເນື່ອງນັ້ນກໍ່ມີຄວາມເປັນໄປໄດ້ວ່າ ຈະຊ່ວຍໃຫ້ໄດ້ຮັບໝາກຜົນທີ່ເປັນຮູບປະທຳຫຼາຍຂຶ້ນ ທັງໃນລະດັບນະໂຍບາຍ ແລະ ການປະຕິບັດ.

## ການປະເມີນອີງຕາມຫຼັກການຂອງ ອົງການເພື່ອຄວາມຮ່ວມມືທາງດ້ານເສດຖະກິດ ແລະ ການພັດທະນາ (OECD)/ຄະນະກຳມະການຄວາມຊ່ວຍເຫຼືອເພື່ອການພັດທະນາ (DAC):

ຕໍ່ກັບການອອກແບບ, ຄຸ້ມຄອງ ແລະ ແນວທາງປະຕິບັດໂຄງການ ແມ່ນໄດ້ມີການປະເມີນອີງຕາມຫຼັກການດັ່ງຕໍ່ໄປນີ້:

ສຳລັບ **ປະສິດທິຜົນ** ແລະ **ປະສິດທິພາບ** ຂອງການດຳເນີນໂຄງການ ພວກເຮົາສັງເກດເຫັນວ່າ ອົງການ IR ແລະ Oxfam ມີການເຮັດວຽກຮ່ວມກັນຢ່າງມີປະສິດທິພາບສູງ ເພື່ອໃຫ້ບັນລຸຈຸດປະສົງຂອງໂຄງການ ໂດຍທັງສອງອົງການ ແມ່ນມີຈຸດແຂງສະເພາະດ້ານທີ່ສົ່ງເສີມເຊິ່ງກັນ ແລະ ກັນ ໂດຍສະເພາະແມ່ນປະສົບການເຮັດວຽກທີ່ມີຄວາມເລິກເຊິ່ງ, ມີເຄືອຂ່າຍທີ່ເຂັ້ມແຂງ ແລະ ມີປະສົບການມາຢ່າງຍາວນານໃນການສ້າງການມີສ່ວນຮ່ວມຮ່ວມ ແລະ ສະໜັບສະໜູນໃນລະດັບຊຸມຊົນ ຈົນເຖິງ ລະດັບພາກພື້ນ ຢູ່ໃນພາກພື້ນລຸ່ມແມ່ນ້ຳຂອງ. ເຖິງຢ່າງໃດກໍ່ຕາມຍັງເຫັນວ່າໂຄງສ້າງຂອງການເຮັດວຽກໃນຮູບແບບຄູ່ຮ່ວມງານ ຫຼື ພັດທະມິດນັ້ນຍັງມີຄວາມສັບສົນຢູ່ ໂດຍສະເພາະແມ່ນເຫັນວ່າມີການນຳໃຊ້ງົບປະມານຂ້ອນຂ້າງສູງ ຕໍ່ການດຳເນີນໂຄງການໃນຮູບແບບນີ້. ການສະໜັບສະໜູນທັງຈາກ SDC ແລະ DFAT ແມ່ນໄດ້ເຮັດໃຫ້ ມີຖານຊັບພະຍາກອນທີ່ໝັ້ນຄົງ ແລະ ການສາຍສຳພັນທີ່ດີກັບບັນດາຄູ່ຮ່ວມພັດທະນາອື່ນໆຢູ່ໃນພາກພື້ນ ລວມເຖິງ ຄວາມສາມາດໃນການບັນລຸເປົ້າໝາຍໂຄງການແມ່ນດຳເນີນໄປໄດ້ຢ່າງກວ້າງຂວາງຫຼາຍຂຶ້ນດ້ວຍ; ແຕ່ໃນຂະນະດຽວກັນກໍ່ນຳມາເຊິ່ງຄວາມຈຳເປັນທີ່ຕ້ອງໄດ້ສຸມໃສ່ການຈັດການທາງດ້ານຊັບພະຍາ ກອນເພີ່ມຫຼາຍຂຶ້ນ ເພື່ອໃຫ້ສາມາດຕອບສະໜອງກັບຄວາມຮັບຜິດຊອບ ແລະ ເງື່ອນໄຂຕ່າງໆຂອງແຫຼ່ງທຶນ.

ເນື່ອງຈາກໜ່ວຍງານບໍລິຫານໂຄງການ(PMU) ແລະ ທີມງານ Oxfam ຢູ່ໃນແຕ່ລະປະເທດບໍ່ໄດ້ມີສາຍຕັ້ງດຽວກັນ.ຈຶ່ງໄດ້ສົ່ງຜົນສະທ້ອນຕໍ່ກັບປະສິດທິພາບໃນການດຳເນີນງານໃນບາງກໍລະນີ ໂດຍສະເພາະ ແມ່ນສາຍພົວພັນລະຫວ່າງ ສິ່ງນີ້ແມ່ນຂ້ອນຂ້າງເຫັນຊັດເຈນ ໃນກໍລະນີຂອງປະເທດລາວ ທີ່ສະແດງໃຫ້ເຫັນວ່າໂຄງສ້າງພາຍໃນທີ່ມີຄວາມຊັບຊ້ອນນັ້ນ ເປັນປັດໄຈທີ່ສຳຄັນທີ່ສົ່ງຜົນໃຫ້ ຜົນໄດ້ຮັບ ແລະ ປະສິດທິພາບຂອງການດຳເນີນບໍ່ໄດ້ບັນລຸເທົ່າທີ່ຄວນ ແຕ່ໃນຂະນະດຽວກັນ ພັດມີຄວາມຕ້ອງການທາງດ້ານງົບປະມານສູງຂຶ້ນ.

**ຄວາມເຊື່ອມໂຍງ**ຂອງໂຄງການ ກໍ່ເປັນປະເດັນໜຶ່ງທີ່ຖືກຕັ້ງຄຳຖາມ ເນື່ອງຈາກລະດັບການເຂົ້າເຖິງ ແລະ ຮູບແບບການດຳເນີນໂຄງການທີ່ມີຄວາມແຕກຕ່າງກັນຫຼາຍໃນແຕ່ລະປະເທດ ໃນພາກພື້ນນີ້; ພ້ອມນັ້ນກໍ່ຍັງມີປະເດັນຂອງຊ່ອງຫວ່າງຕໍ່ກັບການເຊື່ອມໂຍງກິດຈະກຳຕ່າງໆທີ່ມີການດຳເນີນໃນລະດັບທ້ອງຖິ່ນ ຫາ ຂັ້ນສູນກາງ ແລະ ພາກພື້ນ. ຜ່ານການປະເມີນຄັ້ງນີ້ ໄດ້ຊີ້ໃຫ້ເຫັນວ່າ ເນື່ອງຈາກບັນດາອົງປະກອບທີ່ມີຄວາມແຕກຕ່າງກັນຫຼາຍນັ້ນ ໄດ້ຖືກຮອບຮວມເຂົ້າກັນເພື່ອພະຍາຍາມໃຫ້ມີການດຳເນີນໂຄງການທີ່ມີຄວາມເປັນເອກະພາບກັນທົ່ວພາກພື້ນອັນໄດ້ເຮັດໃຫ້ມີຊ່ອງຫວ່າງເກີດຂຶ້ນ; ເຊິ່ງຜູ້ດຳເນີນໂຄງການແມ່ນໄດ້ຮັບຮູ້ເຖິງຊ່ອງຫວ່າງນີ້ ແລະ ກໍ່ໄດ້ມີການຫາວິທີໃນການແກ້ໄຂ. ປະເດັນນີ້ ເປັນສິ່ງທີ່ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເພື່ອໃຫ້ມີຄວາມຊັດເຈນຫຼາຍຂຶ້ນໃນອະນາຄົດ; ໃນຂະນະດຽວກັນກໍ່ເຫັນວ່າ ທັງແມ່ຍິງ ແລະ ຜູ້ຊາຍໃນລະດັບທ້ອງຖິ່ນຕ່າງກໍ່ຮັບຮູ້ເຖິງບັນຫາທີ່ເກີດຂຶ້ນ ລວມເຖິງສິ່ງທີ່ເປັນບູລິມາສິດທີ່ກ່ຽວຂ້ອງກັບຊຸມຊົນ. ສິ່ງທີ່ເຫັນໄດ້ຊັດເຈນທີ່ສຸດ ກໍ່ຄືຜົນໄດ້ຮັບຈາກການເຊື່ອມຕໍ່ກັນຂອງບັນດາຜູ້ນຳຊຸມຊົນໃນຂັ້ນທ້ອງຖິ່ນ ສູ່ລະດັບພາກພື້ນ ເຊິ່ງໄດ້ເຮັດໃຫ້ກາຍເປັນການສ້າງເຄືອຂ່າຍທີ່ໃຫຍ່ຂຶ້ນເພື່ອສານຕໍ່ຄວາມມຸ່ງຫວັງຂອງຊຸມຊົນ.

ໃນການປະເມີນເຫັນວ່າ ໂຄງການແມ່ນສາມາດເສີມສ້າງ**ຄວາມຍືນຍົງ**ໄດ້ ເຊິ່ງເປັນຜົນມາຈາກການສຸມໃສ່ໃນວຽກງານການສົ່ງ ເສີມທີ່ເຮັດໃຫ້ຊຸມຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ເຄືອຂ່າຍມີຄວາມເຂັ້ມແຂງຍິ່ງຂຶ້ນ ຕະຫຼອດເຖິງການສະໜັບສະໜູນເຊິ່ງກັນ ແລະ ກັນ ລວມເຖິງຄວາມຊ່ຽວຊານ ແລະ ເຂັ້ມແຂງທາງດ້ານວິຊາການຂອງທັງອົງການ IR ແລະ Oxfam ຢູ່ໃນພາກພື້ນນີ້. ເຖິງຢ່າງໃດກໍ່ຕາມ ເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງມີການຈັດສັນຊັບພະຍາກອນຢ່າງຕໍ່ເນື່ອງ ສຳລັບຜູ້ທີ່ມີສ່ວນຮ່ວມໃນຂັ້ນທ້ອງຖິ່ນ ແລະ ບັນດາເຄືອຂ່າຍ ເພື່ອຮັກສາລະດັບຄຸນນະພາບທີ່ມີຢູ່ໃນປັດຈຸບັນນີ້ໄວ້. ເຊິ່ງສິ່ງດັ່ງກ່າວແມ່ນລວມເຖິງການເອົາໃຈໃສ່ໃຫ້ຫຼາຍຂຶ້ນຕໍ່ກັບການລະດົມຂົນຂວາຍພາກລັດ ໃນການສະໜັບສະໜູນບັນດາສະຖາບັນທ້ອງຖິ່ນຕ່າງໆເຊິ່ງກໍ່ຕິດພັນກັບນະໂຍບາຍຂອງລັດຖະບານດ້ວຍ. ໃນຂະນະດຽວກັນ ຄວາມສາມາດຂອງຄູ່ຮ່ວມງານໃນການສືບຕໍ່ດຳເນີນກິດຈະກຳຢູ່ຂັ້ນທ້ອງຖິ່ນ ກໍ່ແມ່ນຂຶ້ນກັບຄວາມສາມາດຂອງເຂົາເຈົ້າຕໍ່ກັບການຕອບສະໜອງຄວາມຕ້ອງການເພື່ອແກ້ໄຂຄວາມກັງວົນທາງດ້ານການດຳລົງຊີວິດຂອງຊຸມຊົນ ລວມເຖິງ ລະດັບການປ່ຽນແປງເມື່ອມີການດຳເນີນໂຄງການໄປໄດ້ໄລຍະໜຶ່ງແລ້ວດ້ວຍ.

ການດຳເນີນໂຄງການເຫັນວ່າ**ມີຄວາມສອດຄ້ອງ** ຢ່າງເດັ່ນຊັດ ດັ່ງທີ່ຫຼາຍໆທ່ານທີ່ພວກເຮົາສຳພາດໄດ້ກ່າວໄວ້. ໃນຂະນະດຽວກັນກໍ່ຍັງມີປະເດັນຂອງຄວາມບໍ່ແນ່ນອນທີ່ມີເລື້ອຍມາ ກ່ຽວກັບຂອບເຂດຂອງຜົນສຳເລັດຂອງຄາດໝາຍທີ 3 ທີ່ໄດ້ສົມມຸຖານໄວ້ວ່າ ຈະບັນລຸເປົ້າໝາຍໃນໂຄງການ IP ໄລຍະຕໍ່ໄປ ຕາມກອບເວລາເບື້ອງຕົ້ນ ທີ່ກຳນົດໄວ້ 8 ປີ ອີງໃສ່ສະພາບທາງດ້ານການ ເມືອງຢູ່ໃນພາກພື້ນ. ຄວາມສອດຄ້ອງຕໍ່ກັບຜົນໄດ້ຮັບທີ່ຊັດເຈນທີ່ເກີດຂຶ້ນ ແມ່ນການສົ່ງເສີມຄວາມເປັນຜູ້ນຳຂອງແມ່ຍິງ, ການມີສ່ວນຮ່ວມຂອງຊຸມຊົນທີ່ບອກບາງ ຫຼື ດ້ອຍໂອກາດໃນພື້ນທີ່ໂຄງການແມ່ນເພີ່ມຂຶ້ນຫລາຍກວ່າເກົ່າ ແລະ ການສົ່ງເສີມເພື່ອອຳນວຍຄວາມສະດວກພື້ນທີ່ແກ່ພາກປະຊາສັງຄົມແມ່ນເຫັນວ່າມີຄວາມສຳຄັນຢ່າງຍິ່ງ ໃນສະພາບການທີ່ມີການປ່ຽນແປງຢ່າງໄວວາຢູ່ໃນພາກພື້ນນີ້.

## ຂໍ້ສະເໜີແນະນຳ:

ຂໍ້ສະເໜີແນະນຳຕໍ່ໄປນີ້ ແມ່ນມີຂື້ນບົດພື້ນຖານ ການສັນນິຖານວ່າ ສະຖາບັນກອງທຶນຈະສືບຕໍ່ໃນການສະໜັບສະໜູນ ໂຄງການ ການມີສ່ວນຮ່ວມ (IP) ໃນໄລຍະຕໍ່ໜ້າ ຫຼື ໃຫ້ການສະໜັບສະໜູນແຜນງານທີ່ມີການປະຕິບັດທີ່ມີຄວາມໃກ້ຄຽງ ຫຼື ເຊື່ອມໂຍງກັບໂຄງການ IP ຢູ່ໃນພາກພື້ນນີ້.

ຂໍ້ສະເໜີແນະນຳ ທີ່ມີໃນບົດລາຍງານນີ້ ແມ່ນອີງໃສ່ຈຸດແຂງຈາກການດຳເນີນໂຄງການ IP2  ເຊິ່ງສາມາດນຳມາພິຈາລະນາໃນການດຳເນີນໂຄງການໃນອະນາຄົດໄດ້ ລວມເຖິງສິ່ງທີ່ເປັນບົດຮຽນອັນສຳຄັນ ແລະ ເພື່ອນຳມາປັບປຸງການປະຕິບັດໂຄງການໃຫ້ດີຂຶ້ນ. ແນ່ນອນວ່າ ຂໍ້ສະເໜີຕໍ່ໄປນີ້ແມ່ນອາດຈະບໍ່ໄດ້ຄອບຄຸມທຸກໆລາຍລະອຽດທີ່ມີຢູ່ໃນການດຳເນີນໂຄງການ IP2 ແຕ່ວ່າສິ່ງທີ່ຈະນຳສະເໜີຕໍ່ໄປນີ້ ແມ່ນຄວນພິຈາລະນາໂດຍອີງໃສ່ການສັນນິຖານວ່າ ການປະຕິບັດແມ່ນສາມາດບັນລຸຜົນໄດ້ຢ່າງມີຜົນສຳເລັດໃນທັງ 3 ຄາດໝາຍຫຼັກ ແລະ 6 ຫຼັກການປະເມີນຂອງ OECD/DAC ຄວນຖືກນຳມາໃຊ້ເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດໂຄງການໃນໄລຍະຕໍ່ໄປ.

### ສຳລັບການອອກແບບໂຄງການໃນອະນາຄົດ:

1. ຮູບແບບໃນການສົ່ງເສີມ ແລະ ສະໜັບສະໜູນການເປັນຜູ້ນຳຂອງແມ່ຍິງ ທີ່ເກີດຂື້ນຢູ່ໃນການດຳເນີນໂຄງການ IP2 ແມ່ນຄວນລະບຸໄວ້ສະເພາະ ແລະ ນຳໄປແລກປ່ຽນໃນວົງກວ້າງໃຫ້ຫຼາຍຂຶ້ນ ເພື່ອໃຫ້ເກີດມີການນຳໄປປັບ ແລະ ໝູນໃຊ້ໃນປະເທດອື່ນໆ ທີ່ເຫັນວ່າມີຄວາມເປັນໄປໄດ້ ທີ່ຈະປະກົດເຫັນຜົນໄດ້ຫຼາຍທີ່ສຸດ ແລະ ຕໍ່ກັບແຜນງານອື່ນໆດ້ວຍ. ຮູບແບບນີ້ຄວນຖືກນຳມາສານຕໍ່ສຳລັບໂຄງການ ການມີສ່ວນຮ່ວມ (IP) ໃນໄລຍະຕໍ່ໄປ.
2. ສຳລັບແຜນງານ ການສົ່ງເສີມຄວາມເປັນຜູ້ນຳຂອງແມ່ຍິງໃນອະນາຄົດ ຄວນພິຈາລະນາເຖິງ ເລື່ອງລາວການປ່ຽນແປງສ່ວນບຸກຄົນຂອງແມ່ຍິງ ອີງຕາມສະຖານະພາບຂອງບັນທັດຖານທາງບົດບາດ ຍິງ-ຊາຍ ທີ່ມີຢູ່ໃນແນວທາງການປະຕິບັດໃນສັງ ຄົມ ລວມໄປເຖິງ ເສັ້ນທາງທີ່ຈະກ້າວໄປສູ່ການປ່ຽນແປງ ທີ່ເກີດມາຈາກສິ່ງທີ່ເຂົາເຈົ້າເຫັນ ຫຼື ສ້າງຂື້ນ.
3. ວຽກງານການພັດທະນາຄວາມເປັນຜູ້ນຳຂອງແມ່ຍິງ ຈາກລະດັບຊຸມຊົນສູ່ລະດັບປະເທດ ແລະ ພາກພື້ນ ຄວນເປັນເປົ້າໝາຍຫຼັກຂອງໂຄງການ ທີ່ຄວນສຸມໃສ່ໃນໄລຍະຕໍ່ໜ້າ ໂດຍອີງໃສ່ໝາກຜົນທີ່ໄດ້ຮັບ ແລະ ການຂະຫຍາຍຕໍ່ ຂອງຜົນສຳເລັດ ແລະ ບົດຮຽນທີ່ໄດ້ຮັບຈາກການປະຕິບັດໂຄງການ IP2 ທີ່ຜ່ານມາ.
4. ຄວນມີຍຸດທະສາດທີ່ຊັດເຈນ ແລະ ສອດຄ້ອງຫຼາຍຂຶ້ນ ໃນການມີສ່ວນຮ່ວມຂອງກຸ່ມຄົນພິການ, ກຸ່ມຄົນຫຼາກຫຼາຍທາງເພດ (SOGIE) ແລະ ກຸ່ມຄົນດ້ອຍໂອກາດອື່ນໆ ໂດຍອີງໃສ່ ຕົວຢ່າງຂອງຜົນສຳເລັດທີ່ໄດ້ຮັບຈາກການປະຕິບັດໂຄງ ການ IP2 ທີ່ຜ່ານມາ ເພື່ອນຳມາໃຊ້ ໃນການພັດທະນາແຜນງານທີ່ກ່ຽວຂ້ອງໃນໂຄງການໄລຍະຕໍ່ໜ້າ ໂດຍມີການປະ ສານສົມທົບກັບ ບັນດາອົງການກຸ່ມຄົນພິການ ແລະ ອົງການທີ່ເຮັດວຽກທາງດ້ານຄວາມຫຼາກຫຼາຍທາງດ້ານເພດ ໃນການອອກແບບໂຄງການໄລຍະຕໍ່ໜ້າ.
5. ການສະໜັບສະໜູນ ແມ່ຍິງຊົນເຜົ່າໃນການເປັນຜູ້ນຳ ທີ່ເຫັນວ່າໄດ້ຮັບຜົນສຳເລັດພາຍໃຕ້ການດຳເນີນງານໂຄງການ IP2 ແມ່ນຄວນໄດ້ຮັບການສືບຕໍ່ ແລະ ຂະຫຍາຍເປັນວົງກວ້າງຕື່ມ ໂດຍສະເພາະໃນພື້ນທີ່ ທີ່ມີຄວາມເປັນໄປໄດ້ໃນທົ່ວພາກພື້ນແມ່ນ້ຳຂອງ; ພ້ອມທັງເພີ່ມການສະໜັບສະໜູນ ໃນການເຊື່ອມຕໍ່ກັບຂະບວນການເຄື່ອນໄຫວແມ່ຍິງຊົນເຜົ່າໃນລະ ດັບສາກົນໃຫ້ຫຼາຍຂື້ນ.
6. ບົດຮຽນທີ່ໄດ້ຮັບ ຈາກການສົ່ງເສີມການມີສ່ວນຮ່ວມຂອງໄວໜຸ່ມຢູ່ໃນທຸກໆແຜນງານຂອງໂຄງການ IP2 ນັ້ນຄວນຖືກນຳໃຊ້ເປັນຂໍ້ມູນ ເພື່ອນຳມາພັດທະນາເປັນຍຸດທະສາດສະເພາະວຽກງານໄວໜຸ່ມ ໃນການດຳເນີນໂຄງການໄລຍະຕໍ່ໜ້າ.

7. ການສຶກສາຊ່ອງທາງທີ່ມີຄວາມເປັນໄປໄດ້ ຕໍ່ກັບການສະໜັບສະໜູນ ເປັນວຽກບູລິມາສິດໜຶ່ງທີ່ສຳຄັນ ເພື່ອໃຫ້ສາມາດສືບຕໍ່ຈັດສັນຊັບພະຍາກອນ ແກ່ກຸ່ມຊາວປະມົງໃນຊຸມຊົນ, ກຸ່ມຈັດຕັ້ງທ້ອງຖິ່ນອື່ນໆ ແລະ ບັນດາເຄືອຂ່າຍ, ສະຖາບັນຜູ້ໃຫ້ທຶນທີ່ມີຄວາມເປັນອິດສະຫຼະ ໂດຍສະເພາະແມ່ນການຂົນຂວາຍໃຫ້ມີການຈັດສັນງົບປະມານ ຈາກລັດຖະບານໃນລະດັບປະເທດ ຕໍ່ກັບການສະໜັບສະໜູນກຸ່ມດັ່ງກ່າວ

8. ເອົາໃຈໃສ່ຕໍ່ກັບຄວາມສຳຄັນ ໃນການພັດທະນາຮູບແບບການຮ່ວມມືອື່ນໆທີ່ມີຄວາມເປັນໄປໄດ້ ໃນການດຳເນີນວຽກງານໃນຕໍ່ໜ້າ ໂດຍຄຳນຶງເຖິງລະດັບຄວາມເຂັ້ມແຂງຂອງອົງການຈັດຕັ້ງຂັ້ນຊຸມຊົນທີ່ມີເພີ່ມຂຶ້ນ ແລະ ສຶກສາວ່າແນວທາງການປະຕິບັດໃດທີ່ຈະຫຼຸດການເພິ່ງພາ ອົງກອນທີ່ເປັນຄູ່ຮ່ວມງານຂອງ IP2 ທີ່ເຮັດໜ້າທີ່ເປັນຕົວກາງ ໃນການກະຕຸ້ນການມີສ່ວນຮ່ວມ

9. ການຄຳນຶງເຖິງຄວາມແຕກຕ່າງທາງດ້ານການເມືອງ ແລະ ເສດຖະສິດ ແລະ ພື້ນທີ່ຂອງພາກປະຊາສັງຄົມໃນແຕ່ລະປະ ເທດ ເປັນເລື່ອງທີ່ສຳຄັນທີ່ຄວນໄດ້ເອົາໃຈໃສ່ເພີ່ມຂຶ້ນ ເມື່ອມີການພັດທະນາ ທິດສະດີແຫ່ງການປ່ຽນແປງ (ToC) ສຳລັບການດຳເນີນ ໂຄງການ IP ໃນໄລຍະຕໍ່ໜ້າ ແລະ ຈະຕ້ອງໄດ້ສະທ້ອນສິ່ງດັ່ງກ່າວໃຫ້ເຫັນຢ່າງຊັດເຈນຢູ່ໃນການອອກແບບ ທິດສະດີແຫ່ງການປະຕິບັດ (ToA) ດ້ວຍ.

10. ໃນການອອກແບບໂຄງການ IP ໃນໄລຍະຕໍ່ໜ້າ ຄວນຊີ້ໃຫ້ເຫັນຢ່າງຊັດເຈນວ່າ  ຜົນສຳເລັດໃນການສົ່ງເສີມການເປັນຜູ້ນຳ, ການມີສ່ວນຮ່ວມ ແລະ ການລະດົມຂົນຂວາຍ ໃນລະດັບຊຸມຊົນ ແມ່ນສາມາດເຊື່ອມໂຍງສູ່ລະດັບປະເທດ ແລະພາກພື້ນ ຢ່າງຕໍ່ເນື່ອງໄດ້ຄືແນວໃດ ໂດຍຄຳນຶງເຖິງສະຖານະການ ແລະ ຂໍ້ຈຳກັດທີ່ຕ່າງກັນໃນແຕ່ລະປະເທດ ດັ່ງທີ່ກ່າວເຊັ່ນດຽວກັນໃນຂໍ້ແນະນຳທີ 4

11. ຄວນມີການພັດທະນາຍຸດທະສາດ ສຳລັບການສົ່ງເສີມ ແລະ ສະໜັບສະໜູນແນວຄິດລິເລີ່ມ ພະລັງງານທາງເລືອກໃໝ່ຈາກຂັ້ນທ້ອງຖິ່ນ ຫາ ພາກພື້ນ ໃຫ້ມີລາຍລະອຽດຫຼາຍຂຶ້ນ ໃນໂຄງການໄລຍະຕໍ່ໜ້າ ໂດຍສະເພາະແມ່ນຄວາມເປັນໄປໄດ້ໃນການເຊື່ອມໂຍງກັບບັນດາໂຄງການອື່ນໆທີ່ DFAT ໃຫ້ການສະໜັບສະໜູນຢູ່ໃນພາກພື້ນນີ້

12. ບົດຮຽນທີ່ໄດ້ຮັບຈາກການນຳໃຊ້ທັງສື່ແບບເກົ່າ ແລະ ສື່ແບບໃໝ່ ເຂົ້າມາສະໜັບສະໜູນການດຳເນີນໂຄງການ IP2 ໃນທົ່ວພາກພື້ນນີ້  ແມ່ນຄວນໄດ້ຮັບການບັນທຶກໄວ້ ແລະ ນຳມາວິເຄາະເພື່ອພັດທະນາເປັນແຜນຍຸດທະສາດ ສຳລັບການນຳໃຊ້ເພື່ອສະໜັບສະໜູນວຽກງານໃນໂຄງການໄລຍະໜ້າ. ສຳລັບແຜນວຽກສື່ສານໃນອະນາຄົດ ຄວນມີການເຜີຍແຜ່ບົດຮຽນທີ່ເປັນຜົນສຳເລັດຂອງການຈັດຕັ້ງປະຕິບັດໂຄງການທີ່ຜ່ານມາ ແລະ ຂໍ້ມູນທີ່ສຳຄັນຂອງບົດບາດຊຸມຊົນ ແລະ ຂອງບົດບາດ ຍິງ-ຊາຍ ຢູ່ໃນລະດັບໂຍບາຍ

13. ບົດຮຽນທີ່ໄດ້ຮັບຈາກການເຮັດວຽກຮ່ວມກັບສະຖາບັນວິຊາການ ທັງທີ່ເປັນຜົນມາຈາກການເປີດຊ່ອງທາງໃຫ້ມີສ່ວນຮ່ວມໂດຍກົງ ແລະ ການເຮັດວຽກເປັນຄູ່ຮ່ວມງານກັນ ເພື່ອເສີມສ້າງຂີດຄວາມສາມາດໃຫ້ກັບຊຸມຊົນໃນການເກັບກຳຂໍ້ມູນ ເພື່ອນຳມາເປັນຫຼັກຖານ ໃນການກະຕຸ້ນໃຫ້ເກີດມີການປ່ຽນແປງນັ້ນ ກໍ່ຄວນໄດ້ຮັບການບັນທຶກເປັນຊຸດຂໍ້ມູນໄວ້ເພື່ອໃຊ້ເປັນບ່ອນອີງໃນການພັດທະນາຍຸດທະສາດການສືບຕໍ່ເຮັດວຽກດັ່ງກ່າວໃນອະນາຄົດ. ແນວທາງທີ່ມີຄວາມເປັນໄປໄດ້ໃນການການປະຕິບັດນີ້ມີຄື:

    - ເສີມສ້າງຄວາມເຂັ້ມແຂງໃນການເຮັດບົດຄົ້ນຄວ້າຮ່ວມກັນ:  ໂດຍເພີ່ມການເຮັດວຽກຮ່ວມກັນຫຼາຍຂຶ້ນລະຫວ່າງ ສະຖາບັນການສຶກສາໃນລະດັບປະເທດ ແລະ ສະຖາບັນຄົ້ນຄວ້າໃນລະດັບສາກົນ ເພື່ອສ້າງຖານຂໍ້ມູນ ແລະ ບົດສຶກສາທີ່ສາມາດນຳມາເປັນຫຼັກຖານ ຕໍ່ກັບປະເດັນທີ່ຊຸມຊົນກັງວົນ ແລະ ກ່ຽວກັບບົດບາດ ຍິງ-ຊາຍ
    - ການສ້າງຂີດຄວາມສາມາດສຳລັບນັກວິໄຈໃນຂັ້ນທ້ອງຖິ່ນ: ສະໜອງການຝຶກອົບຮົມ ແລະ ຊັບພະຍາກອນຕ່າງໆທີ່ຈຳເປັນ ແກ່ນັກວິໄຈທ້ອງຖິ່ນ ໂດຍສະເພາະແມ່ນນັກວິໄຈທີ່ມີການນຳໃຊ້ວິທີການ ແລະ ການຄົ້ນຄວ້າທີ່ຕິດພັນກັບ ການສຶກສາທາງດ້ານບົດບາດ ຍິງ-ຊາຍ, ການພັດທະນາຊຸມຊົນ ແລະ ການວິເຄາະທາງດ້ານນະໂຍບາຍ ເພື່ອເສີມສ້າງຄວາມເຂັ້ມແຂງ ແລະ ເຮັດໃຫ້ເຂົາເຈົ້າສາມາດມີສ່ວນຮ່ວມຢ່າງມີປະສິດທິພາບຕໍ່ກັບການປຶກສາຫາລືທາງດ້ານຕ່າງໆທີ່ກ່ຽວຂ້ອງ.

- ການພັດທະນາສື່ສິ່ງພິມ ແລະ ການເຜີຍແຜ່ຂໍ້ມູນ: ສົ່ງເສີມການເຜີຍແຜ່ສື່ສິ່ງພິມ ທີ່ເປັນຜົນໄດ້ຮັບຈາກຄົ້ນຄວ້າ ຜ່ານວາລະສານວິຊາການ ແລະ ສື່ສັງຄົມອອນລາຍ ເພື່ອເພີ່ມການຮັບຮູ້ ແລະ ເຂົ້າເຖິງຂໍ້ມູນ ໂດຍຮັບປະກັນວ່າ ມວນຊົນສາມາດເຂົ້າເຖິງຜົນໄດ້ຮັບຈາກຂອງການຄົ້ນຄວ້າໄດ້ຢ່າງກວ້າງຂວາງຫຼາຍຂຶ້ນ ໂດຍສະເພາະແມ່ນ ຜູ້ກຳນົດນະໂຍບາຍ.
- ການສ້າງ ບົດສັງລວມຫຍໍ້ ແລະ ຂໍ້ສະເໜີແນະນຳທາງດ້ານນະໂຍບາຍ: ໃຫ້ການສະໜັບສະໜູນໃນການເຮັດວຽກຮ່ວມກັນ ເພື່ອພັດທະນາບັນດາບົດສັງລວມຫຍໍ້ທາງດ້ານນະໂຍບາຍທີ່ມີຄວາມກະທັດຫັດ ແລະ ນຳສະເໜີຂໍ້ມູນອີງຕາມຫຼັກຖານທີ່ຄົ້ນພົບ ທີ່ຊ່ວຍລະບຸຂໍ້ສະເໜີແນະນຳໄດ້ຢ່າງຊັດເຈນ ເພື່ອໃຫ້ສາມາດກ້າວໄປສູ່ການນຳໄປຈັດຕັ້ງປະຕິບັດຕົວຈິງໄດ້ ໂດຍອີງໃສ່ຜົນໄດ້ຮັບຈາກການສຶກສາ, ແນໃສ່ຜູ້ກຳນົດນະໂຍບາຍ ຫຼື ໜ່ວຍງານຈາກລັດຖະບານທີ່ກ່ຽວຂ້ອງສະເພາະທີ່ເຫັນວ່າມີການເປີດກວ້າງສຳລັບການສົນທະນາປຶກສາຫາລື.
- ການມີສ່ວນຮ່ວມໃນການປຶກສາຫາລືທາງດ້ານນະໂຍບາຍ: ໃນກໍລະນີທີ່ພາກລັດເປີດກວ້າງ ສຳລັບການຈັດເວ ທີແລກປ່ຽນ, ຈັດກອງປະຊຸມສຳມະນາ ແລະ ກອງປະຊຸມໂຕະມົນ ແມ່ນເປັນໂອກາດທີ່ດີສຳລັບນັກຄົ້ນຄວ້າ, ຜູ້ກຳນົດນະໂຍບາຍ ແລະ ຕົວແທນຈາກຊຸມຊົນ ໃນການມີສ່ວນຮ່ວມ ໃນການສົນທະນາແລກປ່ຽນ ແລະ ຫາລືກ່ຽວກັບຜົນໄດ້ຮັບຈາກການຄົ້ນຄວ້າ ແລະ ລວມເຖິງຄວາມເປັນໄປໄດ້ໃນການນຳມາປັບປຸງນະໂຍບາຍ.

14. ທັງອົງການ Oxfam ແລະ International Rivers (IR) ຄວນຮ່ວມກັນທົບທວນ ເຖິງຜົນສຳເລັດ ແລະ ຄວາມທ້າທາຍສຳລັບການມີສ່ວນຮ່ວມຂອງພາກເອກະຊົນ ພາຍໃຕ້ການດຳເນີນໂຄງການ IP ທັງສອງໄລຍະທີ່ຜ່ານ  ເພື່ອເປັນການກຳນົດຍຸດທະສາດທີ່ມີຄວາມຊັດເຈນຫຼາຍຂຶ້ນໃນການດຳເນີນໂຄງການໃນໄລຍະຕໍ່ໜ້າ; ເຊິ່ງຈະຊ່ວຍໃຫ້ເຫັນເຖິງລະດັບຄວາມເປັນໄປໄດ້ໃນການຊຸກຍູ້ຂົນຂວາຍ ແລະ ການເຂົ້າເຖິງບັນດາບໍລິສັດພະລັງງານເຂື່ອນໄຟຟ້າ, ສະຖາບັນການເງິນເອກະຊົນ ແລະ ພາກເອກະຊົນທີ່ພັດທະນາພະລັງງານທາງເລືອກໃໝ່; ລວມເຖິງການວິເຄາະວ່າ ພາກສ່ວນໃດທີ່ຈະເປັນກຸ່ມເປົ້າໝາຍທີ່ສາມາດຂົນຂວາຍເຂົາເຈົ້າໄດ້ ທັງໂດຍທາງກົງ ແລະ ທາງອ້ອມ ຫຼື ຜ່ານການເຮັດວຽກຮ່ວມກັບ ຄູ່ຮ່ວມງານອົງການຈັດຕັ້ງທາງສັງຄົມ, ສື່ ແລະ ຜູ້ຊ່ຽວຊານສະເພາະດ້ານ ແລະ ບັນດານັກຄົ້ນຄວ້າ.

## ສຳລັບການດຳເນີນງານ ແລະ ໂຄງສ້າງ:

15. ຄວນໃຫ້ຄວາມສຳຄັນໃນການແກ້ໄຂຂໍ້ຄົງຄ້າງ ທີ່ອາດຈະເກີດຈາກຄວາມບໍ່ເຂົ້າໃຈໃນບາງປະເດັນຂອງຜູ້ໃຫ້ທຶນ, ລວມເຖິງຊ່ອງທາງທີ່ຈຳເປັນໃນການສື່ສານ ແລະ ຄວາມຮັບຜິດຊອບທີ່ຕ້ອງໄດ້ປະຕິບັດ ເພື່ອເພີ່ມປະສິດທິພາບໃນການມີສ່ວນຮ່ວມຂອງຜູ້ໃຫ້ທຶນ ໃນການປະກອບສ່ວນໃນການດຳເນີນໂຄງການ; ແລະ ເພື່ອສ້າງຄວາມເຂົ້າໃຈກັນກ່ຽວກັບຂໍ້ກຳນົດທີ່ຕ້ອງໄດ້ປະຕິບັດ ໃຫ້ມີຄວາມສອດຄ້ອງກັນຫຼາຍທີ່ສຸດເທົ່າທີ່ຈະເປັນໄປໄດ້.
16. ທີມງານບໍລິຫານ ໂຄງການ Oxfam ໃນລະດັບພາກພື້ນ ແລະ ທີມທີ່ປະຈຳ Oxfam ຢູ່ໃນແຕ່ລະປະເທດ ແມ່ນຈະຕ້ອງໄດ້ປັງປຸງວິທີການເຮັດວຽກ ແລະ ຮູບການສະໜອງທຶນຕື່ມ ຖ້າຫາກມີການດຳເນີນໂຄງການໃນໄລຍະຕໍ່ໜ້າ
17. ອົງການ Oxfam ຄວນຈັດກອງປະຊຸມເພື່ອຫາລືພາຍໃນຮ່ວມກັບບັນດາຜູ້ໃຫ້ທຶນ ຕໍ່ກັບແນວທາງທີ່ເປັນໄປໄດ້ວ່າ ການບໍລິຫານ ແລະ ຄວາມຮັບຜິດຊອບໃນການດຳເນີນໂຄງການເຖິງປັດຈຸບັນ ແມ່ນຄວນມີການປັບປຸງໄປໃນທິດທາງໃດ ຫຼື ອາດຈະມີການກະຈາຍວຽກ ເພື່ອໃຫ້ມີສ່ວນຮ່ວມຫຼາຍຂຶ້ນຂອງພະນັກງານໃນລະດັບບໍລິຫານ ໃນການພັດທະນາຍຸດທະສາດ ແລະ ຄຸນນະພາບຂອງການດຳເນີນວຽກຮ່ວມກັນ
18. ຄວນມີການຮັບຮູ້ວ່າ ຜົນຈາກການດຳເນີນງານຂອງໂຄງການ IP2 ແມ່ນມີສ່ວນສຳຄັນໃນການສະໜັບສະໜູນ ແລະ ເສີມຂະຫຍາຍແຜນງານອື່ນ ຂອງອົງການ IR ແລະ Oxfam ທີ່ຕິດພັນກັບວຽກງານການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ, ພະລັງງານທາງເລືອກໃໝ່ ແລະ ການຈັດການຊັບພະຍາກອນທຳມະຊາດ ເຊິ່ງຄວນຄຳນຶງ ເຊັ່ນດຽວກັນ ໃນໂຄງການໄລຍະຕໍ່ໜ້າ; ພ້ອມນັ້ນ ຄວນຂະຫຍາຍການມີສ່ວນຮ່ວມຢ່າງເປັນລະບົບຫຼາຍຂຶ້ນກັບບັນດາໂຄງການອື່ນໆ ທີ່ໄດ້ຮັບທຶນສະໜັບສະໜູນເຊັ່ນດຽວກັນຈາກ SDC ແລະ DFAT.

**Oxfam in Cambodia**
The Point, 3F, No. 113C, Mao Tse Tung Blvd.,
Tuol Svay Prey I, Beung Keng Kang, Phnom Penh, Cambodia

(855) 23885 412 / (855) 23885413

Info.Cambodia@oxfam.org

asia.oxfam.org